ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 027 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 07 ມັງກອນ 2020

# ລັດຖະດຳລັດ
# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
## ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍການຟື້ນຟູ ແລະ ການລົ້ມລະລາຍ ຂອງວິສາຫະກິດ (ສະບັບປັບປຸງ)

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ, ສະບັບເລກທີ 30/ສພຊ, ລົງວັນທີ 26 ພະຈິກ 2019 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍການຟື້ນຟູ ແລະ ການລົ້ມລະລາຍຂອງວິສາຫະກິດ (ສະບັບປັບປຸງ)
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ, ສະບັບເລກທີ 32/ຄປຈ, ລົງວັນທີ 11 ທັນວາ 2019.

ປະທານປະເທດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

ມາດຕາ 1 ປະກາດໃຊ້ກົດໝາຍວ່າດ້ວຍການຟື້ນຟູ ແລະ ການລົ້ມລະລາຍຂອງວິສາຫະກິດ (ສະບັບປັບປຸງ).

ມາດຕາ 2 ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານປະເທດ ແຫ່ງ ສປປ ລາວ

ບຸນຍັງ ວໍລະຈິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 30 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 26 / 11 / 19

# ມະຕິ

## ຂອງກອງປະຊຸມສະພາແຫ່ງຊາດ
## ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍການຟື້ນຟູ ແລະ ການລົ້ມລະລາຍ ຂອງວິສາຫະກິດ (ສະບັບປັບປຸງ)

---

ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ມາດຕາ 53 ຂໍ້ 1 ແລະ ກົດໝາຍວ່າດ້ວຍສະພາແຫ່ງຊາດ (ສະບັບປັບປຸງ ປີ 2015) ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 8 ຂອງສະພາແຫ່ງຊາດ ຊຸດທີ VIII ໄດ້ຄົ້ນຄວ້າພິຈາລະນາ ຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍການຟື້ນຟູ ແລະ ການລົ້ມລະລາຍຂອງວິສາຫະກິດ (ສະບັບປັບປຸງ) ໃນວາລະກອງປະຊຸມ ຄັ້ງວັນທີ 26 ພະຈິກ 2019.

### ກອງປະຊຸມສະພາແຫ່ງຊາດ ຕົກລົງ:

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍການຟື້ນຟູ ແລະ ການລົ້ມລະລາຍຂອງວິສາຫະກິດ (ສະບັບປັບປຸງ) ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ　　　　　　　　　　　　　　　　　　ເລກທີ 75 /ສພຊ
ນະຄອນຫຼວງວຽງຈັນ, ວັນທີ 26 ທັນວາ 2019

# ກົດໝາຍ
# ວ່າດ້ວຍການຟື້ນຟູ ແລະ ການລົ້ມລະລາຍ
# ຂອງວິສາຫະກິດ (ສະບັບປັບປຸງ)

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 (ປັບປຸງ) ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຟື້ນຟູ ແລະ ການລົ້ມລະລາຍ ຂອງວິສາຫະກິດ ເພື່ອແກ້ໄຂວິສາຫະກິດທີ່ຢູ່ໃນສະພາວະລົ້ມລະລາຍ ຫຼື ໃກ້ຈະຢູ່ໃນສະພາວະລົ້ມລະລາຍ ໃຫ້ມີຄວາມເປັນເອກະພາບ, ຖືກຕ້ອງ ແລະ ວ່ອງໄວ, ຮັບປະກັນປົກປ້ອງຜົນປະໂຫຍດອັນຊອບທຳຂອງເຈົ້າໜີ້, ວິສາຫະກິດລູກໜີ້ ແລະ ບຸກຄົນອື່ນທີ່ກ່ຽວຂ້ອງ, ສ້າງຄວາມເຊື່ອໝັ້ນແກ່ລະບົບສິນເຊື່ອ ແນໃສ່ຮັກສາຄວາມໝັ້ນຄົງຂອງລະບົບເສດຖະກິດ, ສ້າງເງື່ອນໄຂແກ່ການດຳເນີນທຸລະກິດ ແລະ ການລົງທຶນ, ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

**ມາດຕາ 2 (ໃໝ່) ການຟື້ນຟູ ແລະ ການລົ້ມລະລາຍຂອງວິສາຫະກິດ**

ການຟື້ນຟູວິສາຫະກິດ ແມ່ນ ການແກ້ໄຂວິສາຫະກິດທີ່ກຳລັງປະສົບຄວາມຫຍຸ້ງຍາກທາງດ້ານການເງິນ ຊຶ່ງບໍ່ສາມາດຊຳລະໜີ້ສິນ ໂດຍມີການຮ້ອງຂໍຂອງວິສາຫະກິດລູກໜີ້ ເພື່ອໃຫ້ໂອກາດສືບຕໍ່ດຳເນີນທຸລະກິດຂອງຕົນ ຕາມການຕົກລົງຂອງກອງປະຊຸມເຈົ້າໜີ້ ຊຶ່ງສານໄດ້ຮັບຮອງເອົາ.

ການລົ້ມລະລາຍຂອງວິສາຫະກິດ ແມ່ນ ການແກ້ໄຂວິສາຫະກິດທີ່ກຳລັງປະສົບຄວາມຫຍຸ້ງຍາກທາງດ້ານການເງິນ ຊຶ່ງບໍ່ສາມາດຊຳລະໜີ້ສິນ ເມື່ອເຖິງກຳນົດເວລາ ໂດຍມີການຮ້ອງຂໍຂອງວິສາຫະກິດ ຫຼື ຮ້ອງຟ້ອງຂອງເຈົ້າໜີ້ ເພື່ອໃຫ້ສານຕັດສີນລົ້ມລະລາຍ.

**ມາດຕາ 3 (ໃໝ່) ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ວິສາຫະກິດ** ໝາຍເຖິງ ວິສາຫະກິດສ່ວນບຸກຄົນ, ວິສາຫະກິດຮຸ້ນສ່ວນ, ບໍລິສັດຈຳກັດ, ບໍລິສັດມະຫາຊົນ ແລະ ວິສາຫະກິດຂອງລັດ ລວມທັງສະຫະກອນ ທີ່ສ້າງຕັ້ງຂຶ້ນຢ່າງຖືກຕ້ອງຕາມກົດໝາຍ;

2. **ວິສາຫະກິດຂະໜາດນ້ອຍ** ໝາຍເຖິງ ຫົວໜ່ວຍທຸລະກິດທີ່ໄດ້ຂຶ້ນທະບຽນ ຊຶ່ງໄດ້ຈັດແບ່ງຕາມຂະແໜງທຸລະກິດ ໂດຍມີຈຳນວນແຮງງານ, ມູນຄ່າຊັບສິນ ຫຼື ລາຍຮັບທຸລະກິດປະຈຳປີ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການ;

3. **ຈຸນລະວິສາຫະກິດ** ໝາຍເຖິງ ວິສາຫະກິດຂະໜາດນ້ອຍສຸດຂອງຂະແໜງການຜະລິດ, ການຄ້າ ແລະ ການບໍລິການ ໂດຍມີ ແຮງງານ, ມູນຄ່າຊັບສິນ ຫຼື ລາຍຮັບທຸລະກິດປະຈຳປີ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການ;

4. **ວິສາຫະກິດທີ່ຢູ່ໃນສະພາວະລົ້ມລະລາຍ** ໝາຍເຖິງ ວິສາຫະກິດທີ່ກຳລັງປະສົບຄວາມຫຍຸ້ງຍາກທາງດ້ານການເງິນ ຊຶ່ງບໍ່ສາມາດຊຳລະໜີ້ສິນຂອງຕົນ ເມື່ອເຖິງກຳນົດເວລາ;

5. **ວິສາຫະກິດທີ່ໃກ້ຈະຢູ່ໃນສະພາວະລົ້ມລະລາຍ** ໝາຍເຖິງ ວິສາຫະກິດທີ່ຍັງບໍ່ທັນຢູ່ໃນສະພາວະລົ້ມລະລາຍ ແຕ່ວິສາຫະກິດດັ່ງກ່າວ ຮູ້ວ່າຕົນມີຄວາມຫຍຸ້ງຍາກທາງດ້ານການເງິນ ຈະບໍ່ສາມາດໃຊ້ແທນໜີ້ສິນ ແລະ ຈະຢູ່ໃນສະພາວະລົ້ມລະລາຍໃນອະນາຄົດອັນໃກ້;

6. **ວິສາຫະກິດລູກໜີ້** ໝາຍເຖິງ ວິສາຫະກິດ ທີ່ຖືກຮ້ອງຟ້ອງ ຫຼື ຮ້ອງຂໍດ້ວຍຕົນເອງ ໃຫ້ສານພິຈາລະນາການຟື້ນຟູ ຫຼື ການລົ້ມລະລາຍ;

7. **ລູກໜີ້** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີພັນທະຊຳລະໜີ້ດ້ວຍ ເງິນ, ຊັບສິ່ງຂອງ ຫຼື ພັນທະອື່ນ ໃຫ້ແກ່ເຈົ້າໜີ້;

8. **ເຈົ້າໜີ້** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີສິດທວງໃຫ້ລູກໜີ້ ຊຳລະໜີ້ ຫຼື ປະຕິບັດພັນທະອື່ນໃດໜຶ່ງ. ເຈົ້າໜີ້ ປະກອບດ້ວຍ ເຈົ້າໜີ້ທີ່ມີການຄ້ຳປະກັນ ແລະ ເຈົ້າໜີ້ທີ່ບໍ່ມີການຄ້ຳປະກັນ;

9. **ເຈົ້າໜີ້ທີ່ມີການຄ້ຳປະກັນ** ໝາຍເຖິງ ຜູ້ທີ່ມີສິດທວງ ຊຶ່ງສິດທວງດັ່ງກ່າວ ໄດ້ຮັບການຄ້ຳປະກັນການໃຊ້ແທນໜີ້ສິນ ດ້ວຍຫຼັກຊັບຄ້ຳປະກັນ ຫຼື ຄ້ຳປະກັນດ້ວຍຮູບການອື່ນ;

10. **ເຈົ້າໜີ້ທີ່ບໍ່ມີການຄ້ຳປະກັນ** ໝາຍເຖິງ ຜູ້ທີ່ມີສິດທວງ ແຕ່ສິດທວງດັ່ງກ່າວ ບໍ່ໄດ້ຮັບການຄ້ຳປະກັນການຊຳລະໜີ້;

11. **ໜັງສືຊີ້ແຈງຊັບສິນ ແລະ ໜີ້ສິນ** ໝາຍເຖິງ ເອກະສານທີ່ວິສາຫະກິດລູກໜີ້ ສ້າງຂຶ້ນໃນເວລາມີການຮ້ອງຟ້ອງ ຫຼື ຮ້ອງຂໍໃຫ້ສານພິຈາລະນາການຟື້ນຟູ ຫຼື ການລົ້ມລະລາຍຂອງວິສາຫະກິດ ເພື່ອອະທິບາຍ, ຊີ້ແຈງກ່ຽວກັບສະພາບການດຳເນີນທຸລະກິດ, ຊັບສິນ ແລະ ໜີ້ສິນຂອງວິສາຫະກິດຕົນ;

12. **ສິດທວງ** ໝາຍເຖິງ ສິດຂອງຝ່າຍໜຶ່ງ ຊຶ່ງຮຽກຮ້ອງໃຫ້ອີກຝ່າຍໜຶ່ງ ປະຕິບັດພັນທະຂອງຕົນ ຕາມສັນຍາ ຫຼື ກົດໝາຍ;

13. **ການຄອບຄອງໂດຍວິສາຫະກິດລູກໜີ້ (Debtor in Possession-DIP)** ໝາຍເຖິງ ວິສາຫະກິດລູກໜີ້ ທີ່ສືບຕໍ່ບໍລິຫານວິສາຫະກິດຂອງຕົນ ຕາມການອະນຸຍາດຂອງສານ ບົນພື້ນຖານການເຫັນດີຂອງກອງປະຊຸມເຈົ້າໜີ້ ແຕ່ຢູ່ພາຍໃຕ້ການຄວບຄຸມ ແລະ ຄຸ້ມຄອງຂອງຜູ້ຄວບຄຸມຊັບສິນ;

14. **ການລົ້ມລະລາຍຂ້າມແດນ** ໝາຍເຖິງ ການດຳເນີນຄະດີລົ້ມລະລາຍຕໍ່ວິສາຫະກິດຢູ່ປະເທດໜຶ່ງ ແຕ່ວິສາຫະກິດດັ່ງກ່າວ ມີການດຳເນີນທຸລະກິດ ຫຼື ຊັບສິນຢູ່ປະເທດອື່ນ;

15. **ຜູ້ບໍລິຫານ** ໝາຍເຖິງ ຄະນະອຳນວຍການ ແລະ/ຫຼື ຜູ້ຈັດການ ຂອງວິສາຫະກິດລູກໜີ້;

16. **ພາກສ່ວນທີ່ກ່ຽວຂ້ອງ** ໝາຍເຖິງ ເຈົ້າໜີ້, ວິສາຫະກິດລູກໜີ້, ຜູ້ຄວບຄຸມຊັບສິນ ແລະ ອົງການຈັດຕັ້ງຂອງລັດທີ່ກ່ຽວຂ້ອງກັບການຟື້ນຟູ ຫຼື ລົ້ມລະລາຍຂອງວິສາຫະກິດ.

**ມາດຕາ 4 (ໃໝ່) ນະໂຍບາຍຂອງລັດກ່ຽວກັບການຟື້ນຟູ ແລະ ການລົ້ມລະລາຍຂອງວິສາຫະກິດ**

ລັດ ຊຸກຍູ້ ແລະ ສົ່ງເສີມ ການແກ້ໄຂວິສາຫະກິດທີ່ຢູ່ໃນສະພາວະລົ້ມລະລາຍ ຫຼື ໃກ້ຈະຢູ່ໃນສະພາວະລົ້ມລະລາຍ ດ້ວຍການສ້າງກົນໄກ ແລະ ອຳນວຍຄວາມສະດວກ ໃຫ້ວິສາຫະກິດດັ່ງກ່າວ ສາມາດຟື້ນຟູ ຫຼື ລົ້ມລະລາຍ ຖືກຕ້ອງຕາມກົດໝາຍ ແລະ ມີປະສິດທິພາບ.

ລັດ ເອົາໃຈໃສ່ ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງ ເຈົ້າໜີ້, ວິສາຫະກິດລູກໜີ້, ຜົນປະໂຫຍດຂອງລັດ ແລະ ບຸກຄົນອື່ນ ທີ່ກ່ຽວຂ້ອງໃນການຟື້ນຟູ ຫຼື ລົ້ມລະລາຍຂອງວິສາຫະກິດ.

**ມາດຕາ 5 (ໃໝ່) ຫຼັກການກ່ຽວກັບການຟື້ນຟູ ແລະ ການລົ້ມລະລາຍຂອງວິສາຫະກິດ**

ການຟື້ນຟູ ແລະ ການລົ້ມລະລາຍຂອງວິສາຫະກິດ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ນຳໃຊ້ການຟື້ນຟູ ຫຼື ການລົ້ມລະລາຍຂອງວິສາຫະກິດ ເປັນທາງເລືອກໃນການແກ້ໄຂ;
2. ຮັບປະກັນການປະຕິບັດຕໍ່ເຈົ້າໜີ້ ຢ່າງເປັນທຳ ແລະ ໄດ້ຮັບການໃຊ້ແທນໜີ້ສິນ ຕາມກົດໝາຍ;
3. ກວດກາ ແລະ ຄວບຄຸມຊັບສິນຂອງວິສາຫະກິດລູກໜີ້ ຢ່າງຖືກຕ້ອງ ແລະ ຄົບຖ້ວນ ຕາມກົດໝາຍ ພ້ອມທັງຮັບປະກັນການປະມູນຂາຍ ແລະ ໂອນຊັບສິນ ຕາມມູນຄ່າຕະຫຼາດ ໃນແຕ່ລະໄລຍະ;
4. ຮັບປະກັນຄວາມໂປ່ງໃສ, ຍຸຕິທຳ, ຖືກຕ້ອງຕາມກົດໝາຍ, ວ່ອງໄວ ແລະ ມີປະສິດທິຜົນ;
5. ຮັບປະກັນການເຂົ້າຮ່ວມຂອງທຸກພາກສ່ວນທີ່ກ່ຽວຂ້ອງ ແລະ ເປີດເຜີຍຕໍ່ສາທາລະນະ, ຍົກເວັ້ນຂໍ້ມູນທີ່ເປັນຄວາມລັບ.

**ມາດຕາ 6 (ປັບປຸງ) ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ວິສາຫະກິດທີ່ຢູ່ໃນສະພາວະລົ້ມລະລາຍ ຫຼື ໃກ້ຈະຢູ່ໃນສະພາວະລົ້ມລະລາຍ ທີ່ສ້າງຕັ້ງຂຶ້ນຢ່າງຖືກຕ້ອງຕາມກົດໝາຍຢູ່ ສປປ ລາວ ແລະ ຊັບສິນຂອງວິສາຫະກິດດັ່ງກ່າວ ທີ່ຢູ່ພາຍໃນ ຫຼື ຕ່າງປະເທດ ລວມທັງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ກ່ຽວຂ້ອງກັບການຟື້ນຟູ ຫຼື ການລົ້ມລະລາຍຂອງວິສາຫະກິດຢູ່ ສປປ ລາວ.

ກົດໝາຍສະບັບນີ້ ບໍ່ນຳໃຊ້ສຳລັບການຟື້ນຟູ ຫຼື ການລົ້ມລະລາຍຂອງ ທະນາຄານທຸລະກິດ, ສະຖາບັນການເງິນຈຸລະພາກ ທີ່ຮັບເງິນຝາກ ແລະ ບໍລິສັດປະກັນໄພ.

**ມາດຕາ 7 (ໃໝ່) ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນ, ຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບການຟື້ນຟູ ແລະ ການລົ້ມລະລາຍ ຂອງວິສາຫະກິດ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນ ຂ່າວສານ, ເຕັກນິກ, ເຕັກໂນໂລຊີ, ການພັດທະນາບຸກຄະລາກອນ ລວມທັງການດຳເນີນການລົ້ມລະລາຍຂ້າມແດນ ເພື່ອພັດທະນາວຽກງານດັ່ງກ່າວ ໃຫ້ທັນສະໄໝ, ມີປະສິດທິພາບ ແລະ ປະຕິບັດສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

## ພາກທີ II

## ການຮ້ອງຂໍຟື້ນຟູ, ການຮ້ອງຂໍ ຫຼື ຮ້ອງຟ້ອງລົ້ມລະລາຍ

**ມາດຕາ 8 (ປັບປຸງ) ຜູ້ມີສິດຮ້ອງຂໍຟື້ນຟູ ຫຼື ລົ້ມລະລາຍ**

ຜູ້ມີສິດຮ້ອງຂໍ ໃຫ້ສານພິຈາລະນາການຟື້ນຟູ ຫຼື ການລົ້ມລະລາຍຂອງວິສາຫະກິດ ມີ ດັ່ງນີ້:

1. ວິສາຫະກິດ ທີ່ຢູ່ໃນສະພາວະລົ້ມລະລາຍ ຫຼື ໃກ້ຈະຢູ່ໃນພາວະລົ້ມລະລາຍ;

2. ຂາຮຸ້ນ ຫຼື ຜູ້ຖືຮຸ້ນ ຂອງວິສາຫະກິດທີ່ຢູ່ໃນສະພາວະລົ້ມລະລາຍ ຫຼື ໃກ້ຈະຢູ່ໃນສະພາວະລົ້ມລະລາຍ ທີ່ຕາງໜ້າໃຫ້ຢ່າງໜ້ອຍ ຊາວສ່ວນຮ້ອຍ ຂອງຮຸ້ນທີ່ມີສິດລົງຄະແນນສຽງທັງໝົດ ໃນກໍລະນີວິສາຫະກິດນັ້ນ ບໍ່ຮ້ອງຂໍຟື້ນຟູ ຫຼື ລົ້ມລະລາຍ;

3. ສະມາຊິກສະຫະກອນ ຕາງໜ້າໃຫ້ຢ່າງໜ້ອຍ ໜຶ່ງສ່ວນຫ້າ ຂອງສະມາຊິກທັງໝົດ ໃນກໍລະນີສະຫະກອນ ມີຄວາມຫຍຸ້ງຍາກທາງດ້ານການເງິນ ແລະ ບໍ່ສາມາດຊໍາລະໜີ້ສິນ.

ວິສາຫະກິດທີ່ຖືກຮ້ອງຟ້ອງໃຫ້ລົ້ມລະລາຍ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 10 ຂອງກົດໝາຍສະບັບນີ້ ກໍສາມາດຮ້ອງຂໍໃຫ້ສານພິຈາລະນາການຟື້ນຟູວິສາຫະກິດ ໃນເວລາມີການແກ້ຟ້ອງ. ໃນກໍລະນີວິສາຫະກິດທີ່ຖືກຮ້ອງຟ້ອງນັ້ນ ເປັນວິສາຫະກິດຂະໜາດນ້ອຍ ແລະ ຈຸນລະວິສາຫະກິດ ກໍສາມາດຮ້ອງຂໍການຟື້ນຟູ ຕາມທີ່ໄດ້ກໍານົດໄວ້ໃນພາກທີ VI ຂອງກົດໝາຍສະບັບນີ້.

**ມາດຕາ 9 (ປັບປຸງ) ສໍານວນຄໍາຮ້ອງຂໍຟື້ນຟູ ຫຼື ລົ້ມລະລາຍ**

ສໍານວນຄໍາຮ້ອງຂໍຟື້ນຟູ ຫຼື ລົ້ມລະລາຍ ປະກອບດ້ວຍ:

1. ຄໍາຮ້ອງຂໍ ຕາມແບບພິມທີ່ສານກໍານົດ;

2. ບົດບັນທຶກ ຫຼື ມະຕິຂອງຂາຮຸ້ນ ຫຼື ກອງປະຊຸມຜູ້ຖືຮຸ້ນ ໃຫ້ຮ້ອງຂໍຟື້ນຟູ ຫຼື ລົ້ມລະລາຍຂອງວິສາຫະກິດ ຍົກເວັ້ນວິສາຫະກິດສ່ວນບຸກຄົນ, ບໍລິສັດຈໍາກັດຜູ້ດຽວ ແລະ ການຮ້ອງຂໍຂອງຂາຮຸ້ນ ຫຼື ຜູ້ຖືຮຸ້ນ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 8 ຂໍ້ 2 ຂອງກົດໝາຍສະບັບນີ້;

3. ໜັງສືຊີ້ແຈງຊັບສິນ ແລະ ໜີ້ສິນ ຊຶ່ງມີເນື້ອໃນຕົ້ນຕໍ ດັ່ງນີ້:

- ຊື່, ທີ່ຢູ່ ແລະ ເບີໂທລະສັບ ຂອງວິສາຫະກິດລູກໜີ້;
- ບັນຊີຊັບສິນຂອງວິສາຫະກິດລູກໜີ້ ລວມທັງ ມູນຄ່າ ແລະ ທີ່ຕັ້ງຂອງຊັບສິນດັ່ງກ່າວ;
- ບັນຊີເຈົ້າໜີ້ ລວມທັງ ຈໍານວນໜີ້ສິນ, ຊັບສິນທີ່ພົວພັນກັບການຄໍ້າປະກັນ ແລະ ຊື່, ທີ່ຢູ່, ເບີໂທລະສັບ ຂອງເຈົ້າໜີ້ແຕ່ລະຄົນ;
- ບັນຊີຜູ້ອອກແຮງງານ ແລະ ຈໍານວນໜີ້ຄ່າແຮງງານທີ່ຄ້າງຈ່າຍ;
- ບັນຊີໜີ້ຕ້ອງຮັບຂອງວິສາຫະກິດລູກໜີ້ ລວມທັງ ຈໍານວນໜີ້ ແລະ ຊື່, ທີ່ຢູ່, ເບີໂທລະສັບ ຂອງລູກໜີ້ແຕ່ລະຄົນ;

4. ເອກະສານລາຍງານການເງິນ ແລະ ບົດລາຍງານປະຈໍາປີຂອງວິສາຫະກິດຄົບ ສອງປີ ຜ່ານມາ, ຖ້າວິສາຫະກິດເຄື່ອນໄຫວບໍ່ຮອດ ສອງປີ ກໍໃຫ້ລາຍງານນັບແຕ່ວັນເລີ່ມດໍາເນີນທຸລະກິດ;

5. ເອກະສານອື່ນ ທີ່ພົວພັນກັບການຮ້ອງຂໍ.

**ມາດຕາ 10 (ປັບປຸງ) ຜູ້ມີສິດຮ້ອງຟ້ອງໃຫ້ວິສາຫະກິດລົ້ມລະລາຍ**

ຜູ້ມີສິດຮ້ອງຟ້ອງ ໃຫ້ສານພິຈາລະນາການລົ້ມລະລາຍຂອງວິສາຫະກິດ ມີ ດັ່ງນີ້:

1. ເຈົ້າໜີ້ ຂອງວິສາຫະກິດທີ່ຢູ່ໃນສະພາວະລົ້ມລະລາຍ ທີ່ມີມູນຄ່າໜີ້ສິນຢ່າງໜ້ອຍ ສິບລ້ານກີບ ແລະ ໄດ້ທວງໃຫ້ວິສາຫະກິດລູກໜີ້ ຊຳລະໜີ້ສິນແລ້ວ ຢ່າງໜ້ອຍ ສາມຄັ້ງ ຊຶ່ງແຕ່ລະຄັ້ງຫ່າງກັນບໍ່ຫຼຸດ ຊາວວັນ ແລະ ວິສາຫະກິດລູກໜີ້ ກໍຮັບຮູ້ການທວງໜີ້ແລ້ວ ແຕ່ຫາກບໍ່ຊຳລະໜີ້ສິນ;

2. ຜູ້ອອກແຮງງານ ຫຼື ສະຫະພັນກຳມະບານ ໃນກໍລະນີວິສາຫະກິດຢູ່ໃນສະພາວະລົ້ມລະລາຍ ບໍ່ຈ່າຍເງິນເດືອນ ແລະ/ຫຼື ຄ່າແຮງງານ ເປັນເວລາ ສາມເດືອນ ຕິດຕໍ່ກັນ.

ການຮ້ອງຟ້ອງ ທີ່ບໍ່ສອດຄ່ອງຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1 ແລະ ຂໍ້ 2 ຂອງມາດຕານີ້ ຖືເປັນການຮ້ອງຟ້ອງດ້ວຍຄວາມບໍ່ບໍລິສຸດໃຈ ແລະ ມີຈຸດປະສົງເຮັດໃຫ້ຜູ້ຖືກຮ້ອງຟ້ອງເສຍຫາຍ, ຜູ້ຮ້ອງຟ້ອງ ຕ້ອງມີຄວາມຮັບຜິດຊອບຕໍ່ຄວາມເສຍຫາຍທີ່ເກີດຂຶ້ນ ແລະ ອາດຖືກດຳເນີນຄະດີຕາມກົດໝາຍ.

**ມາດຕາ 11 (ປັບປຸງ) ສຳນວນຄຳຮ້ອງຟ້ອງ**

ສຳນວນຄຳຮ້ອງຟ້ອງໃຫ້ລົ້ມລະລາຍ ປະກອບດ້ວຍ:

1. ຄຳຮ້ອງຟ້ອງ ຕາມແບບພິມທີ່ສານກຳນົດ;
2. ເອກະສານທີ່ເປັນຫຼັກຖານກ່ຽວກັບໜີ້ສິນທີ່ຄ້າງຊຳລະ;
3. ໃບແຈ້ງທວງໜີ້ ຫຼື ຫຼັກຖານອື່ນກ່ຽວກັບການທວງໜີ້;
4. ສັນຍາທີ່ກ່ຽວຂ້ອງ;
5. ເອກະສານອື່ນ ທີ່ພົວພັນກັບການຮ້ອງຟ້ອງ.

**ມາດຕາ 12 (ປັບປຸງ) ສານທີ່ມີສິດອຳນາດໃນການດຳເນີນຄະດີຟື້ນຟູ ແລະ ລົ້ມລະລາຍ**

ສານທີ່ມີສິດອຳນາດໃນການດຳເນີນຄະດີຟື້ນຟູ ແລະ ລົ້ມລະລາຍຂອງວິສາຫະກິດ ແມ່ນ ສານປະຊາຊົນແຂວງ, ນະຄອນຫຼວງ ໂດຍແມ່ນຄະນະສານການຄ້າ ເປັນຜູ້ຮັບຜິດຊອບພິຈາລະນາຕັດສິນຄະດີເປັນຂັ້ນຕົ້ນ. ຄະນະສານການຄ້າຂອງສານປະຊາຊົນພາກ ມີສິດພິພາກສາຄະດີເປັນຂັ້ນອຸທອນ ແລະ ຂັ້ນສຸດທ້າຍ.

ຄະນະສານການຄ້າ ຂອງສານປະຊາຊົນແຂວງ, ນະຄອນຫຼວງ ບ່ອນສຳນັກງານໃຫຍ່ຂອງວິສາຫະກິດລູກໜີ້ຕັ້ງຢູ່ ເປັນຜູ້ມີສິດອຳນາດໃນການດຳເນີນຄະດີຟື້ນຟູ ຫຼື ລົ້ມລະລາຍຂອງວິສາຫະກິດ.

ສານທີ່ມີສິດອຳນາດໃນການດຳເນີນຄະດີຟື້ນຟູ ແລະ ລົ້ມລະລາຍ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັບຄຳຮ້ອງຟ້ອງ ຫຼື ຮ້ອງຂໍ ໃຫ້ພິຈາລະນາການຟື້ນຟູ ຫຼື ການລົ້ມລະລາຍຂອງວິສາຫະກິດ;

2. ແຕ່ງຕັ້ງ, ປ່ຽນແທນ ຜູ້ຄວບຄຸມຊັບສິນ ແລະ ຮັບຮອງຄ່າແຮງງານ ແລະ/ຫຼື ຄ່າໃຊ້ຈ່າຍອື່ນຂອງຜູ້ຄວບຄຸມຊັບສິນ ບົນພື້ນຖານການເຫັນດີຂອງກອງປະຊຸມເຈົ້າໜີ້;

3. ອອກຄຳສັ່ງເປີດການພິຈະລະນາຄະດີຟື້ນຟູ ຫຼື ລົ້ມລະລາຍ;

4. ຮັບຮອງຄ່າໃຊ້ຈ່າຍບໍລິຫານທີ່ເກີດຂຶ້ນໃນການດຳເນີນຄະດີຟື້ນຟູ ຫຼື ລົ້ມລະລາຍ;

5. ພິຈາລະນາການສະເໜີຄັດຄ້ານການກະທຳໃດໜຶ່ງຂອງຜູ້ຄວບຄຸມຊັບສິນ;

6. ພິຈາລະນາຮັບຮອງ ຫຼື ປະຕິເສດການຮັບຮອງ ຂໍ້ສະເໜີແກ້ໄຂໜີ້ສິນ ຫຼື ແຜນຟື້ນຟູວິສາຫະກິດ ລວມທັງການສະເໜີໃຫ້ປັບປຸງຂໍ້ສະເໜີ ຫຼື ແຜນຟື້ນຟູດັ່ງກ່າວ;

7. ພິຈາລະນາອອກຄຳສັ່ງກ່ຽວກັບການນຳໃຊ້ມາດຕະການໃດໜຶ່ງ ເພື່ອປົກປ້ອງຊັບສິນຂອງວິສາຫະກິດລູກໜີ້, ການຊຳລະສະສາງຊັບສິນຂອງວິສາຫະກິດລູກໜີ້;

8. ຕັດສິນໃຫ້ວິສາຫະກິດລົ້ມລະລາຍ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 13 (ໃໝ່) ການກວດກາສຳນວນຄຳຮ້ອງຂໍ ຫຼື ຮ້ອງຟ້ອງ**

ພາຍຫຼັງໄດ້ຮັບສຳນວນຄຳຮ້ອງຂໍ ຫຼື ຄຳຮ້ອງຟ້ອງແລ້ວ, ຈ່າສານ ຕ້ອງກວດກາເບິ່ງສຳນວນດັ່ງກ່າວ ມີເນື້ອໃນ ແລະ ເອກະສານ ຖືກຕ້ອງ ແລະ ຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 9 ຫຼື ມາດຕາ 11 ຂອງກົດໝາຍສະບັບນີ້ແລ້ວ ຫຼື ບໍ່, ຖ້າຖືກຕ້ອງ ແລະ ຄົບຖ້ວນແລ້ວ ຈ່າສານ ຈຶ່ງຮັບຄຳຮ້ອງຂໍ ຫຼື ຄຳຮ້ອງຟ້ອງນັ້ນ ມາພິຈາລະນາ, ໃນກໍລະນີບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນນັ້ນ ຈ່າສານ ກໍສົ່ງຄືນ ແລ້ວແນະນຳໃຫ້ໄປແກ້ໄຂຂໍ້ບົກພ່ອງເສຍກ່ອນ.

ເມື່ອຈ່າສານຮັບສຳນວນຄຳຮ້ອງຂໍ ຫຼື ຄຳຮ້ອງຟ້ອງແລ້ວ ໃຫ້ຜູ້ຮ້ອງຂໍ ຫຼື ຮ້ອງຟ້ອງຈ່າຍຄ່າທຳນຽມ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍຄ່າທຳນຽມສານ.

**ມາດຕາ 14 (ປັບປຸງ) ການແຈ້ງຄຳຮ້ອງຂໍ ຫຼື ຄຳຮ້ອງຟ້ອງ**

ພາຍໃນເວລາ ຫ້າວັນລັດຖະການ ນັບແຕ່ວັນທີ່ສານ ໄດ້ຮັບຄຳຮ້ອງຂໍເປັນຕົ້ນໄປ ສານ ຕ້ອງແຈ້ງເປັນລາຍລັກອັກສອນ ໃຫ້ເຈົ້າໜີ້ ແລະ ລູກໜີ້ຂອງວິສາຫະກິດທີ່ຮ້ອງຂໍ ຕາມໜັງສືຊີ້ແຈງຊັບສິນ ແລະ ໜີ້ສິນ ແລະ ສຳເນົາສຳນວນຄຳຮ້ອງຂໍໃຫ້ພວກກ່ຽວ ເພື່ອສົ່ງໜັງສືໄລ່ລຽງໜີ້ສິນຂອງຕົນ ພ້ອມທັງຂໍ້ມູນຫຼັກຖານທີ່ກ່ຽວຂ້ອງໃຫ້ສານ ພາຍໃນເວລາ ສິບຫ້າວັນ ນັບແຕ່ວັນໄດ້ຮັບໜັງສືແຈ້ງຈາກສານ.

ພາຍໃນເວລາ ຫ້າວັນລັດຖະການ ນັບແຕ່ວັນທີ່ສານໄດ້ຮັບຄຳຮ້ອງຟ້ອງເປັນຕົ້ນໄປ ສານ ຕ້ອງອອກໝາຍຮຽກວິສາຫະກິດທີ່ຖືກຮ້ອງຟ້ອງນັ້ນ ມາຮັບຊາບຄຳຮ້ອງຟ້ອງ ແລະ ມອບສຳເນົາສຳນວນຄຳຮ້ອງຟ້ອງໃຫ້ຜູ້ກ່ຽວ. ວິສາຫະກິດທີ່ຖືກຮ້ອງຟ້ອງນັ້ນ ຕ້ອງສົ່ງຄຳແກ້ຟ້ອງ, ໜັງສືຊີ້ແຈງຊັບສິນ ແລະ ໜີ້ສິນ, ບົດລາຍງານການເງິນ ແລະ ເອກະສານອື່ນທີ່ກ່ຽວຂ້ອງ ລວມທັງຮ້ອງຂໍຟື້ນຟູວິສາຫະກິດ ຖ້າມີຄວາມຕ້ອງການ ໃຫ້ສານ ພາຍໃນເວລາ ສິບຫ້າວັນ ນັບແຕ່ວັນໄດ້ຮັບສຳເນົາຄຳຮ້ອງຟ້ອງ ເປັນຕົ້ນໄປ. ໃນກໍລະນີ ວິສາຫະກິດທີ່ຖືກຮ້ອງຟ້ອງ ບໍ່ສາມາດສົ່ງຄຳແກ້ຟ້ອງໃຫ້ສານ ຕາມກຳນົດເວລາ ໂດຍມີເຫດຜົນພຽງພໍ ຜູ້ກ່ຽວສາມາດຮ້ອງຂໍຕໍ່ສານ ເພື່ອພິຈາລະນາຕໍ່ກຳນົດເວລາດັ່ງກ່າວ ແຕ່ສູງສຸດບໍ່ໃຫ້ເກີນ ສິບວັນ.

**ມາດຕາ 15 (ໃໝ່) ການປະກອບສຳນວນ ແລະ ຂຶ້ນຟ້ອງຄະດີ**

ພາຍຫຼັງໄດ້ຮັບຄຳຮ້ອງຂໍຟື້ນຟູ ຫຼື ລົ້ມລະລາຍແລ້ວ, ຈ່າສານ ຕ້ອງປະກອບສຳນວນ ແລະ ຂຶ້ນຟ້ອງຄະດີ ພາຍໃນເວລາ ສາມວັນລັດຖະການ ນັບແຕ່ວັນໄດ້ຮັບຄຳຮ້ອງຂໍເປັນຕົ້ນໄປ.

ພາຍຫຼັງໄດ້ຮັບຄຳຮ້ອງຟ້ອງໃຫ້ວິສາຫະກິດລົ້ມລະລາຍ ແລະ ຄຳແກ້ຟ້ອງແລ້ວ, ຈ່າສານ ຕ້ອງປະກອບສຳນວນ ແລະ ຂຶ້ນຟ້ອງຄະດີ ພາຍໃນເວລາ ສາມວັນລັດຖະການ ນັບແຕ່ວັນໄດ້ຮັບຄຳແກ້ຟ້ອງເປັນຕົ້ນໄປ.

**ມາດຕາ 16 (ໃໝ່) ການມອບສຳນວນຄະດີໃຫ້ຜູ້ພິພາກສາ**

ພາຍຫຼັງທີ່ໄດ້ຂຶ້ນຟ້ອງເປັນຄະດີແລ້ວ ປະທານສານ ຕ້ອງມອບສຳນວນຄະດີຟື້ນຟູ ຫຼື ລົ້ມລະລາຍຂອງວິສາຫະກິດ ໃຫ້ຫົວໜ້າຄະນະສານການຄ້າ ເພື່ອມອບໝາຍໃຫ້ຜູ້ພິພາກສາໃດໜຶ່ງ ຄົ້ນຄວ້າຄະດີດັ່ງກ່າວ ພາຍໃນເວລາ ສາມວັນລັດຖະການ ນັບແຕ່ວັນຂຶ້ນຟ້ອງຄະດີເປັນຕົ້ນໄປ.

ຜູ້ພິພາກສາທີ່ຖືກມອບໝາຍ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ເກັບກຳຂໍ້ມູນ, ຫຼັກຖານກ່ຽວກັບການຮ້ອງຂໍຟື້ນຟູ, ຮ້ອງຂໍ ຫຼື ຮ້ອງຟ້ອງ ລົ້ມລະລາຍ;
2. ພິຈາລະນາເງື່ອນໄຂໃນການຮ້ອງຂໍຟື້ນຟູ, ຮ້ອງຂໍ ຫຼື ຮ້ອງຟ້ອງ ລົ້ມລະລາຍ;
3. ຄຸ້ມຄອງ ແລະ ຕິດຕາມ ກວດກາ ການເຄື່ອນໄຫວຂອງຜູ້ຄວບຄຸມຊັບສິນ;
4. ກວດກາບົດລາຍງານແຕ່ລະໄລຍະ ແລະ ບົດລາຍງານສຸດທ້າຍຂອງຜູ້ຄວບຄຸມຊັບສິນ;
5. ຮຽກປະຊຸມເຈົ້າໜີ້ຄັ້ງທຳອິດ ຕາມການລາຍງານຂອງຜູ້ຄວບຄຸມຊັບສິນ;
6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 17 (ໃໝ່) ການເປີດການພິຈາລະນາຄະດີຟື້ນຟູ ຫຼື ລົ້ມລະລາຍ**

ຜູ້ພິພາກສາທີ່ຖືກມອບໝາຍ ຕ້ອງຮັບຜິດຊອບຄົ້ນຄວ້າຄະດີ, ສອບສວນ, ເກັບກຳຂໍ້ມູນ ແລະ ປະກອບຫຼັກຖານໃຫ້ສຳເລັດ ພາຍໃນເວລາ ສິບຫ້າວັນ ນັບແຕ່ວັນໄດ້ຮັບສຳນວນຄະດີເປັນຕົ້ນໄປ.

ໃນກໍລະນີການຮ້ອງຂໍ ຜູ້ພິພາກສາທີ່ຖືກມອບໝາຍ ຕ້ອງຄົ້ນຄວ້າຄະດີ ຖ້າມີເງື່ອນໄຂຖືກຕ້ອງຕາມທີ່ໄດ້ກຳນົດໄວ້ໃນມາດຕາ 8 ຂອງກົດໝາຍສະບັບນີ້ແລ້ວ, ສານຕ້ອງອອກຄຳສັ່ງເປີດການພິຈາລະນາຄະດີຟື້ນຟູ ຫຼື ລົ້ມລະລາຍ ພາຍໃນເວລາ ຫ້າວັນລັດຖະການ ພາຍຫຼັງຜູ້ພິພາກສາໄດ້ຄົ້ນຄວ້າແລ້ວ.

ສຳລັບການຮ້ອງຟ້ອງ ຖືກຕ້ອງຕາມເງື່ອນໄຂທີ່ໄດ້ກຳນົດໄວ້ໃນມາດຕາ 10 ຂອງກົດໝາຍສະບັບນີ້ ແລະ ມີຂໍ້ມູນຫຼັກຖານພຽງພໍແລ້ວ ສານຕ້ອງອອກຄຳສັ່ງເປີດການພິຈາລະນາຄະດີລົ້ມລະລາຍຂອງວິສາຫະກິດ ພາຍໃນເວລາ ຫ້າວັນລັດຖະການ ພາຍຫຼັງຜູ້ພິພາກສາໄດ້ຄົ້ນຄວ້າແລ້ວ.

ຄຳສັ່ງເປີດການພິຈາລະນາຄະດີຟື້ນຟູ ຫຼື ລົ້ມລະລາຍ ເປັນຄຳສັ່ງທີ່ໃຊ້ໄດ້ຢ່າງເດັດຂາດ.

ຖ້າການຮ້ອງຂໍ ຫຼື ຮ້ອງຟ້ອງ ຫາກບໍ່ຖືກຕ້ອງຕາມທີ່ໄດ້ກຳນົດໄວ້ໃນມາດຕາ 8 ຫຼື ມາດຕາ 10 ຂອງກົດໝາຍສະບັບນີ້ ຫຼື ມີຂໍ້ມູນຫຼັກຖານບໍ່ພຽງພໍ ສານ ຕ້ອງອອກຄຳສັ່ງບໍ່ເປີດການພິຈາລະນາຄະດີ, ຜູ້ຮ້ອງຂໍ ຫຼື ຮ້ອງຟ້ອງ ທີ່ບໍ່ພໍໃຈຕໍ່ຄຳສັ່ງດັ່ງກ່າວ ມີສິດອຸທອນໄດ້ ພາຍໃນເວລາ ເຈັດວັນ ນັບແຕ່ວັນໄດ້ຮັບຊາບຄຳສັ່ງ ເປັນຕົ້ນໄປ.

**ມາດຕາ 18 (ໃໝ່) ການຢຸດການດຳເນີນການທາງດ້ານກົດໝາຍ**

ພາຍຫຼັງມີຄຳສັ່ງເປີດການພິຈາລະນາຄະດີຟື້ນຟູ ຫຼື ລົ້ມລະລາຍແລ້ວ ເຈົ້າໜີ້, ຄູ່ສັນຍາ ແລະ ບຸກຄົນອື່ນທີ່ກ່ຽວຂ້ອງ ຕ້ອງຢຸດການດຳເນີນການທາງດ້ານກົດໝາຍ ທີ່ໄດ້ດຳເນີນມາກ່ອນ ຫຼື ຈະເລີ່ມດຳເນີນການໃໝ່ ຕໍ່ວິສາຫະກິດລູກໜີ້ ຫຼື ຊັບສິນຂອງວິສາຫະກິດລູກໜີ້ ບໍ່ວ່າຈະເປັນການຮ້ອງຟ້ອງ, ການເຂົ້າຄອບຄອງຊັບສິນ, ການຍຶດ ຫຼື ການກະທຳອື່ນ ໂດຍບໍ່ໄດ້ຮັບອະນຸຍາດຈາກສານ, ຍົກເວັ້ນການດຳເນີນການທີ່ບໍ່ແມ່ນມາດຕະການທາງດ້ານການເງິນ ໂດຍອີງການຈັດຕັ້ງຂອງລັດ ເປັນຕົ້ນ ການດຳເນີນຄະດີອາຍາ, ສິ່ງແວດລ້ອມ, ຄວາມປອດໄພ, ສະຫວັດດີການສັງຄົມ.

ເຈົ້າໜີ້ທີ່ມີການຄ້ຳປະກັນ ສາມາດຮ້ອງຂໍຕໍ່ສານ ເພື່ອພິຈາລະນາອະນຸຍາດໃຫ້ດຳເນີນການທາງດ້ານກົດໝາຍໃດໜຶ່ງໃນກໍລະນີ ດັ່ງນີ້:

1. ຊັບສິນຂອງວິສາຫະກິດລູກໜີ້ທີ່ເປັນຫຼັກຊັບຄ້ຳປະກັນ ອາດມີການຫຼຸດມູນຄ່າ, ເປ່ເພ ຫຼື ສູນເສຍ ໃນໄລຍະຟື້ນຟູວິສາຫະກິດ;

2. ຊັບສິນຂອງວິສາຫະກິດລູກໜີ້ທີ່ເປັນຫຼັກຊັບຄ້ຳປະກັນ ບໍ່ມີຄວາມສຳຄັນ ແລະ ຈຳເປັນ ຕໍ່ການຟື້ນຟູວິສາຫະກິດ.

**ມາດຕາ 19 (ໃໝ່) ການແຕ່ງຕັ້ງຜູ້ຄວບຄຸມຊັບສິນ**

ພາຍຫຼັງອອກຄຳສັ່ງເປີດການພິຈາລະນາຄະດີຟື້ນຟູ ຫຼື ລົ້ມລະລາຍແລ້ວ, ສານ ຕ້ອງແຕ່ງຕັ້ງຜູ້ຄວບຄຸມຊັບສິນ ຕາມບັນຊີຜູ້ຄວບຄຸມຊັບສິນ.

ຜູ້ຄວບຄຸມຊັບສິນ ທີ່ຈະຖືກແຕ່ງຕັ້ງໃຫ້ຮັບຜິດຊອບຄະດີຟື້ນຟູ ຫຼື ລົ້ມລະລາຍໃດໜຶ່ງ ຕ້ອງ:

1. ບໍ່ແມ່ນຜົວ, ເມຍ, ລູກ ຫຼື ຍາດພີ່ນ້ອງຂອງເຈົ້າໜີ້ ຫຼື ວິສາຫະກິດລູກໜີ້;
2. ບໍ່ມີຄວາມຮັບຜິດຊອບ ຫຼື ຜົນປະໂຫຍດຮ່ວມກັບເຈົ້າໜີ້ ຫຼື ວິສາຫະກິດລູກໜີ້;
3. ບໍ່ເຄີຍເປັນຜູ້ບໍລິຫານ ຫຼື ຜູ້ຮັບໃຊ້ວຽກ ຂອງເຈົ້າໜີ້ ຫຼື ວິສາຫະກິດລູກໜີ້;
4. ບໍ່ແມ່ນເຈົ້າໜີ້ ຫຼື ລູກໜີ້ ຂອງວິສາຫະກິດລູກໜີ້;
5. ບໍ່ມີທຸລະກິດທີ່ແຂ່ງກັບວິສາຫະກິດລູກໜີ້.

ເຈົ້າໜີ້ ມີສິດຄັດຄ້ານການແຕ່ງຕັ້ງຜູ້ຄວບຄຸມຊັບສິນຕໍ່ສານ ຖ້າເຫັນວ່າຜູ້ກ່ຽວຫາກມີສາຍພົວພັນ ຫຼື ຜົນປະໂຫຍດຮ່ວມກັບວິສາຫະກິດລູກໜີ້ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1 ຫາ ຂໍ້ 5 ຂອງມາດຕານີ້ ຊຶ່ງສານຕ້ອງພິຈາລະນາການຄັດຄ້ານດັ່ງກ່າວໂດຍໄວ.

**ມາດຕາ 20 (ໃໝ່) ການແຈ້ງ ແລະ ການປະກາດກ່ຽວກັບການດຳເນີນຄະດີ**

ພາຍຫຼັງມີຄຳສັ່ງເປີດການພິຈາລະນາຄະດີຟື້ນຟູ ຫຼື ລົ້ມລະລາຍແລ້ວ, ສານ ຕ້ອງແຈ້ງກ່ຽວກັບການດຳເນີນຄະດີດັ່ງກ່າວ ໃຫ້ເຈົ້າໜີ້ ແລະ ລູກໜີ້ ຂອງວິສາຫະກິດລູກໜີ້ ຕາມໜັງສືຊີ້ແຈງຊັບສິນ ແລະ ໜີ້ສິນ ພ້ອມທັງປະກາດໃຫ້ບຸກຄົນອື່ນ ແລະ ສັງຄົມ ຜ່ານພາຫະນະສື່ມວນຊົນຢ່າງໜ້ອຍ ເຈັດວັນ ຕິດຕໍ່ກັນ ເພື່ອຊາບກ່ຽວກັບການດຳເນີນຄະດີ.

ການແຈ້ງ ແລະ ການປະກາດ ຕ້ອງມີເນື້ອໃນ ດັ່ງນີ້:

1. ວັນທີ, ເດືອນ, ປີ ຂອງຄຳສັ່ງເປີດການພິຈາລະນາຄະດີຟື້ນຟູ ຫຼື ລົ້ມລະລາຍ;
2. ຊື່ ແລະ ທີ່ຢູ່ຂອງວິສາຫະກິດລູກໜີ້;
3. ຊື່ ແລະ ທີ່ຢູ່ຂອງສານທີ່ດຳເນີນຄະດີ;
4. ຊື່ ແລະ ທີ່ຢູ່ຂອງຜູ້ຄວບຄຸມຊັບສິນ;
5. ການຄວບຄຸມຊັບສິນ ແລະ ການລວບລວມຊັບສິນທັງໝົດຂອງວິສາຫະກິດລູກໜີ້;
6. ການທວງສິດໃນການເປັນເຈົ້າໜີ້ ແລະ ກຳນົດເວລາໃນການທວງສິດ;
7. ກຳນົດເວລາ ແລະ ສະຖານທີ່ຈັດກອງປະຊຸມເຈົ້າໜີ້ຄັ້ງທຳອິດ;
8. ເນື້ອໃນອື່ນທີ່ຜູ້ພິພາກສາ ເຫັນວ່າຈຳເປັນ.

**ມາດຕາ 21 (ປັບປຸງ) ການຖອກຮຸ້ນທີ່ຍັງຄ້າງ**

ຜູ້ປະກອບທຶນຂອງວິສາຫະກິດລູກໜີ້ ຕ້ອງຖອກຮຸ້ນທີ່ຕົນຍັງຄ້າງມອບທັງໝົດ ພາຍໃນເວລາສິບຫ້າວັນ ນັບແຕ່ວັນອອກຄຳສັ່ງເປີດການພິຈາລະນາຄະດີຟື້ນຟູ ຫຼື ລົ້ມລະລາຍ ເປັນຕົ້ນໄປ.

ຖ້າຜູ້ປະກອບທຶນນັ້ນ ຫາກບໍ່ຖອກຮຸ້ນທີ່ຍັງຄ້າງຕາມກຳນົດເວລາດັ່ງກ່າວ ຜູ້ຄວບຄຸມຊັບສິນ ສາມາດສະເໜີຕໍ່ສານ ເພື່ອພິຈາລະນານຳໃຊ້ມາດຕະການຍຶດ, ອາຍັດຊັບ ຫຼື ຫັກບັນຊີເງິນຝາກ ຕາມຈຳນວນທີ່ຄ້າງຖອກ ຫຼື ມາດຕະການອື່ນຕາມຄວາມເໝາະສົມ.

### ມາດຕາ 22 (ໃໝ່) ການສະໜອງຂໍ້ມູນ

ພາຍໃນເວລາ ສິບຫ້າວັນ ນັບແຕ່ວັນອອກຄຳສັ່ງເປີດການພິຈາລະນາຄະດີຟື້ນຟູ ຫຼື ລົ້ມລະລາຍ ເປັນຕົ້ນໄປ ວິສາຫະກິດລູກໜີ້ ຕ້ອງສະໜອງຂໍ້ມູນໃຫ້ແກ່ຜູ້ຄວບຄຸມຊັບສິນ ດັ່ງນີ້:

1. ບົດລາຍງານການເງິນ ແລະ ສຳເນົາຂໍ້ມູນການເງິນທັງໝົດ;
2. ສຳເນົາສັນຍາທັງໝົດທີ່ວິສາຫະກິດລູກໜີ້ ເປັນຄູ່ສັນຍາ;
3. ການມອບ, ໂອນຊັບສິນຂອງວິສາຫະກິດລູກໜີ້ ໃຫ້ເຈົ້າໜີ້ ຫຼື ບຸກຄົນໃດໜຶ່ງ;
4. ຂໍ້ມູນອື່ນທີ່ກ່ຽວຂ້ອງ.

ໃນກໍລະນີ ວິສາຫະກິດລູກໜີ້ ຫາກບໍ່ສາມາດສະໜອງຂໍ້ມູນທັງໝົດ ຕາມທີ່ໄດ້ກຳນົດໄວ້ໃນວັກທີໜຶ່ງ ຂອງມາດຕານີ້ ໂດຍມີເຫດຜົນພຽງພໍ ສາມາດຮ້ອງຂໍຕໍ່ສານ ເພື່ອພິຈາລະນາຕໍ່ກຳນົດເວລາດັ່ງກ່າວ ແຕ່ສູງສຸດບໍ່ໃຫ້ເກີນ ສິບຫ້າວັນ.

ນອກຈາກຂໍ້ມູນທີ່ວິສາຫະກິດລູກໜີ້ສະໜອງແລ້ວ, ຜູ້ຄວບຄຸມຊັບສິນ ຍັງສາມາດຮຽກໃຫ້ວິສາຫະກິດລູກໜີ້ມາອະທິບາຍ, ຊີ້ແຈງກ່ຽວກັບຊັບສິນ, ຄວາມຮັບຜິດຊອບ, ການເຄື່ອນໄຫວທາງດ້ານການເງິນ ແລະ ອື່ນໆ.

### ມາດຕາ 23 (ໃໝ່) ການກວດກາການດຳເນີນທຸລະກິດ ແລະ ຊັບສິນຂອງວິສາຫະກິດລູກໜີ້

ພາຍຫຼັງມີຄຳສັ່ງເປີດການພິຈາລະນາຄະດີຟື້ນຟູ ຫຼື ລົ້ມລະລາຍແລ້ວ, ຜູ້ຄວບຄຸມຊັບສິນ ຕ້ອງກວດກາການດຳເນີນທຸລະກິດ, ສະຖານະທາງດ້ານການເງິນ ແລະ ຊັບສິນຂອງວິສາຫະກິດລູກໜີ້ ແລ້ວປະເມີນ ແລະ ລາຍງານຕໍ່ສານ ແລະ ກອງປະຊຸມເຈົ້າໜີ້ ກ່ຽວກັບຄວາມສາມາດໃນການຟື້ນຟູວິສາຫະກິດ ແລະ ການຊຳລະສະສາງໜີ້ສິນແກ່ເຈົ້າໜີ້.

ຜູ້ຄວບຄຸມຊັບສິນ ຕ້ອງລວບລວມ ແລະ ສ້າງບັນຊີຊັບສິນທັງໝົດຂອງວິສາຫະກິດລູກໜີ້ ໂດຍອີງຕາມຂໍ້ມູນທີ່ວິສາຫະກິດລູກໜີ້ສະໜອງໃຫ້ ແລະ ການກວດກາ, ກວດສອບ ແລະ ຊອກຄົ້ນຂອງຜູ້ຄວບຄຸມຊັບສິນເອງ.

ຜູ້ຄວບຄຸມຊັບສິນ ສາມາດເຊີນຜູ້ບໍລິຫານ, ສະມາຊິກຄອບຄົວຂອງເຈົ້າຂອງວິສາຫະກິດ ຫຼື ຜູ້ບໍລິຫານ ແລະ ບຸກຄົນອື່ນທີ່ກ່ຽວຂ້ອງ ມາໃຫ້ຂໍ້ມູນກ່ຽວກັບການຄອບຄອງຊັບສິນທີ່ສົງໄສວ່າເປັນຂອງວິສາຫະກິດລູກໜີ້ ຫຼື ຂໍ້ມູນອື່ນກ່ຽວກັບຊັບສິນຂອງວິສາຫະກິດລູກໜີ້.

### ມາດຕາ 24 (ປັບປຸງ) ການຄວບຄຸມຊັບສິນຂອງວິສາຫະກິດລູກໜີ້

ຊັບສິນທັງໝົດທີ່ເປັນກຳມະສິດ ຫຼື ຢູ່ໃນການຄຸ້ມຄອງຂອງວິສາຫະກິດລູກໜີ້ ທີ່ໄດ້ມາກ່ອນ ແລະ ໃນໄລຍະດຳເນີນຄະດີຟື້ນຟູ ຫຼື ລົ້ມລະລາຍ ລວມທັງຊັບສິນຂອງ ເຈົ້າຂອງວິສາຫະກິດສ່ວນບຸກຄົນ ແລະ ຂາຮຸ້ນປະເພດ ບໍ່ຈຳກັດໜີ້ສິນຂອງວິສາຫະກິດຮຸ້ນສ່ວນ ຕ້ອງຢູ່ພາຍໃຕ້ການຄວບຄຸມຂອງຜູ້ຄວບຄຸມຊັບສິນ ໃນກໍລະນີການຄອບຄອງໂດຍວິສາຫະກິດລູກໜີ້ ຫຼື ພາຍໃຕ້ການຄອບຄອງຂອງຜູ້ຄວບຄຸມຊັບສິນ ໃນກໍລະນີວິສາຫະກິດລູກໜີ້ ບໍ່ໄດ້ບໍລິຫານວິສາຫະກິດ.

ຊັບສິນຂອງວິສາຫະກິດລູກໜີ້ ປະກອບມີ:

1. ຊັບສິນຄົງທີ່ ແລະ ເຄື່ອນທີ່ ລວມທັງຊັບສິນທີ່ໃຫ້ເຊົ່າ, ຂາຍຝາກ ຫຼື ໃຫ້ກູ້ຢືມ;
2. ເງິນສົດ, ບັນຊີເງິນຝາກ;
3. ຮຸ້ນໃນວິສາຫະກິດອື່ນ, ຮຸ້ນກູ້, ພັນທະບັດ;
4. ໜີ້ຕ້ອງຮັບ;
5. ຊັບສິນທາງປັນຍາ;
6. ຊັບສິນປະເພດອື່ນ.

## ມາດຕາ 25 (ປັບປຸງ) ຊັບສິນທີ່ຖືກຍົກເວັ້ນການຄວບຄຸມ

ຊັບສິນທີ່ຖືກຍົກເວັ້ນການຄວບຄຸມ ແມ່ນ ຊັບສິນທີ່ເປັນກຳມະສິດຂອງເຈົ້າຂອງວິສາຫະກິດສ່ວນບຸກຄົນ ຫຼື ຂອງຂາຮຸ້ນປະເພດບໍ່ຈຳກັດໜີ້ສິນ ຂອງວິສາຫະກິດຮຸ້ນສ່ວນສາມັນ ດັ່ງນີ້:

1. ເຄື່ອງເຮືອນ ທີ່ຈຳເປັນ ທີ່ມີມູນຄ່າບໍ່ເກີນ ສອງລ້ານກີບ ຕໍ່ຫົວໜ່ວຍ;
2. ເຄື່ອງນຸ່ງ ແລະ ເຄື່ອງໃຊ້ສອຍສ່ວນຕົວ ທີ່ມີມູນຄ່າບໍ່ເກີນ ສາມລ້ານກີບ ຕໍ່ຄົນ;
3. ປື້ມ ຄຳພີ ຫຼື ສາສະໜາ, ຮູບພາບ ທີ່ມີມູນຄ່າບໍ່ເກີນ ໜຶ່ງລ້ານກີບ ຕໍ່ຫົວໜ່ວຍ;
4. ສະບຽງອາຫານທີ່ຈຳເປັນ ສຳລັບຕົນເອງ ທີ່ກຸ້ມລ້ຽງຊີບໄດ້ ສາມສິບວັນ;
5. ສັດລ້ຽງ ແລະ ເຄື່ອງປູກຂອງຝັງ ທີ່ມີມູນຄ່າບໍ່ເກີນ ສາມລ້ານກີບ;
6. ເຄື່ອງມື ແລະ ອຸປະກອນເຮັດວຽກທີ່ຈຳເປັນໃນການປະກອບອາຊີບ ທີ່ມີມູນຄ່າບໍ່ເກີນ ຫ້າລ້ານກີບ ຕໍ່ ຫົວໜ່ວຍ ລວມທັງອາຫານທີ່ຈຳເປັນ ສຳລັບສັດລ້ຽງ ທີ່ລ້ຽງກຸ້ມໄດ້ ສາມສິບວັນ.

ເຈົ້າຂອງ ຫຼື ຂາຮຸ້ນປະເພດບໍ່ຈຳກັດໜີ້ສິນນັ້ນ ຕ້ອງຍື່ນລາຍການຊັບສິນ ເພື່ອຂໍຍົກເວັ້ນການຄວບຄຸມຕໍ່ສານທີ່ດຳເນີນຄະດີຟື້ນຟູ ຫຼື ລົ້ມລະລາຍ ຢ່າງຊ້າ ເຈັດວັນ ກ່ອນວັນເປີດກອງປະຊຸມເຈົ້າໜີ້ຄັ້ງທຳອິດ. ເຈົ້າໜີ້ ສາມາດຄັດຄ້ານການຂໍຍົກເວັ້ນການຄວບຄຸມຊັບສິນດັ່ງກ່າວ ຊຶ່ງສານ ຕ້ອງພິຈາລະນາຕັດສິນການຂໍຍົກເວັ້ນການຄວບຄຸມຊັບສິນພາຍໃນເວລາ ເຈັດວັນ ນັບແຕ່ວັນໄດ້ຮັບການຂໍ ຫຼື ຄັດຄ້ານ.

## ມາດຕາ 26 (ໃໝ່) ການກວດກາເອກະສານ ແລະ ຂໍ້ມູນໂດຍເຈົ້າໜີ້

ເຈົ້າໜີ້ ສາມາດກວດກາເອກະສານ ແລະ ຂໍ້ມູນທີ່ກ່ຽວຂ້ອງ ລວມທັງ ສຳເນົາເອກະສານ:

1. ໜັງສືຊີ້ແຈງຊັບສິນ ແລະ ໜີ້ສິນ;
2. ບົດບັນທຶກການເຄື່ອນໄຫວດ້ານການບັນຊີ;
3. ເອກະສານຫຼັກຖານຢັ້ງຢືນກ່ຽວກັບໜີ້ສິນ;
4. ບົດບັນທຶກກອງປະຊຸມເຈົ້າໜີ້;
5. ເອກະສານອື່ນ.

ເຈົ້າໜີ້ ຍັງມີສິດໄດ້ຮັບເອກະສານ ແລະ ຂໍ້ມູນກ່ຽວກັບການດຳເນີນຄະດີຟື້ນຟູ ຫຼື ລົ້ມລະລາຍຈາກຜູ້ຄວບຄຸມຊັບສິນ ຫຼື ວິສາຫະກິດລູກໜີ້.

**ມາດຕາ 27 (ໃໝ່) ການແຈ້ງບັນຊີຢູ່ທະນາຄານ ຫຼື ສະຖາບັນການເງິນ**

ເມື່ອວິສາຫະກິດ ຖືກດຳເນີນຄະດີຟື້ນຟູ ຫຼື ລົ້ມລະລາຍແລ້ວ, ທະນາຄານທຸລະກິດ ຫຼື ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ບ່ອນວິສາຫະກິດລູກໜີ້ເປີດບັນຊີ ມີຄວາມຮັບຜິດຊອບແຈ້ງບັນຊີດັ່ງກ່າວ ໃຫ້ຜູ້ຄວບຄຸມຊັບສິນ ພາຍໃນເວລາ ສິບຫ້າວັນ ນັບແຕ່ວັນໄດ້ຮັບໜັງສືແຈ້ງຈາກຜູ້ຄວບຄຸມຊັບສິນເປັນຕົ້ນໄປ.

**ມາດຕາ 28 (ໃໝ່) ການໂຈະການດຳເນີນຄະດີ, ການແກ້ໄຂຂໍ້ຂັດແຍ່ງ ຫຼື ການໂຮມຄະດີ**

ການດຳເນີນຄະດີ ຫຼື ການແກ້ໄຂຂໍ້ຂັດແຍ່ງ ທີ່ກຳລັງດຳເນີນຕໍ່ວິສາຫະກິດລູກໜີ້ ຫຼື ຊັບສິນຂອງວິສາຫະກິດລູກໜີ້ ຈະຖືກໂຈະໃນເວລາດຳເນີນຄະດີຟື້ນຟູ ຫຼື ລົ້ມລະລາຍຂອງວິສາຫະກິດ.

ໃນກໍລະນີ ທີ່ສານ ຫາກເຫັນວ່າການດຳເນີນຄະດີ, ການແກ້ໄຂຂໍ້ຂັດແຍ່ງ ຫຼື ຄະດີອາຍາ ທີ່ຕິດພັນກັບຄ່າເສຍຫາຍ ຊຶ່ງຈະມີຜົນກະທົບຕໍ່ການພິຈາລະນາຄະດີຟື້ນຟູ ຫຼື ລົ້ມລະລາຍ, ຜູ້ພິພາກສາ ຕ້ອງປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ແລ້ວລາຍງານຕໍ່ປະທານສານ ເພື່ອພິຈາລະນາອອກຄຳຊີ້ຂາດໃຫ້ມີການໂຮມສຳນວນຄະດີ, ການແກ້ໄຂຂໍ້ຂັດແຍ່ງ ຫຼື ແຍກການພິຈາລະນາຄ່າເສຍຫາຍທາງແພ່ງໃນຄະດີອາຍານັ້ນ ເຂົ້າມາພິຈາລະນາໃນຄະດີຟື້ນຟູ ຫຼື ລົ້ມລະລາຍ ຕາມກົດໝາຍສະບັບນີ້.

**ມາດຕາ 29 (ໃໝ່) ການກະທຳທີ່ເປັນໂມຄະ**

ຜູ້ຄວບຄຸມຊັບສິນ ມີສິດຮ້ອງຂໍໃຫ້ສານ ພິຈາລະນາຕັດສິນໃຫ້ການກະທຳໃດໜຶ່ງຂອງວິສາຫະກິດລູກໜີ້ ໃນເວລາ ໜຶ່ງປີ ກ່ອນການຮ້ອງຂໍ ຫຼື ຮ້ອງຟ້ອງ ເປັນໂມຄະ ດັ່ງນີ້:

1. ການໂອນ ຫຼື ການມອບຊັບສິນຂອງວິສາຫະກິດລູກໜີ້ ໃຫ້ເຈົ້າໜີ້ ຫຼື ບຸກຄົນໃດໜຶ່ງ;
2. ການປ່ຽນໜີ້ສິນທີ່ບໍ່ມີການຄ້ຳປະກັນ ເປັນໜີ້ສິນທີ່ມີການຄ້ຳປະກັນ;
3. ການຊຳລະໜີ້ສິນໃຫ້ແກ່ເຈົ້າໜີ້ໃດໜຶ່ງ ກ່ອນກຳນົດ;
4. ການຂາຍຊັບສິນຂອງວິສາຫະກິດລູກໜີ້ ໃນລາຄາທີ່ຕ່ຳກວ່າລາຄາຕະຫຼາດ;
5. ການສະລະສິດທວງໜີ້ຕ້ອງຮັບ;
6. ການຮັບຮູ້ໜີ້ສິນທີ່ບໍ່ມີຈິງ ຫຼື ສູງເກີນຄວາມເປັນຈິງ;
7. ການກະທຳອື່ນທີ່ເອື້ອປະໂຫຍດແກ່ເຈົ້າໜີ້ ຫຼື ບຸກຄົນໃດໜຶ່ງ.

**ມາດຕາ 30 (ປັບປຸງ) ການຂາຍກິດຈະການ**

ກິດຈະການສ່ວນໃດສ່ວນໜຶ່ງ ຫຼື ທັງໝົດຂອງວິສາຫະກິດລູກໜີ້ ສາມາດຂາຍໄດ້ ພາຍຫຼັງມີຄຳສັ່ງເປີດການພິຈາລະນາຄະດີຟື້ນຟູ ຫຼື ລົ້ມລະລາຍ. ບຸກຄົນ ຫຼື ນິຕິບຸກຄົນ ທີ່ມີຈຸດປະສົງຊື້ກິດຈະການດັ່ງກ່າວ ໃຫ້ສະເໜີຕໍ່ ສານ, ຜູ້ຄວບຄຸມຊັບສິນ, ເຈົ້າໜີ້ ຫຼື ຄະນະກຳມະການເຈົ້າໜີ້.

ເມື່ອມີການສະເໜີຂໍຊື້ກິດຈະການ ຜູ້ຄວບຄຸມຊັບສິນ, ເຈົ້າໜີ້ ຫຼື ຄະນະກຳມະການເຈົ້າໜີ້ ຕ້ອງກະກຽມເອກະສານ, ປະເມີນມູນຄ່າ, ເຈລະຈາ ແລະ ສ້າງແຜນການຊຳລະ ແລ້ວນຳສະເໜີກອງປະຊຸມເຈົ້າໜີ້ ພິຈາລະນາ.

ຖ້າກອງປະຊຸມເຈົ້າໜີ້ ເຫັນດີຂາຍກິດຈະການຂອງວິສາຫະກິດລູກໜີ້ແລ້ວ ຜູ້ຄວບຄຸມຊັບສິນຕ້ອງສະເໜີຕໍ່ສານ ເພື່ອພິຈາລະນາຮັບຮອງ ແລະ ອອກຄຳສັ່ງຈັດຕັ້ງປະຕິບັດຜົນຂອງກອງປະຊຸມເຈົ້າໜີ້ ພາຍໃນເວລາ ສາມວັນລັດຖະການ ນັບແຕ່ວັນໄດ້ຮັບການສະເໜີ.

ຜູ້ຊື້ກິດຈະການ ຕ້ອງຊຳລະຄ່າຊື້ກິດຈະການ ໃຫ້ຜູ້ຄວບຄຸມຊັບສິນ ຕາມຈຳນວນ ແລະ ກຳນົດເວລາ ຕາມແຜນການຊຳລະ ທີ່ຖືກຮັບຮອງໃນກອງປະຊຸມເຈົ້າໜີ້ ເພື່ອນຳມາໃຊ້ຈ່າຍເຂົ້າໃນການຟື້ນຟູ ຫຼື ຊຳລະສະສາງໜີ້ສິນ ໃຫ້ແກ່ເຈົ້າໜີ້.

ໃນກໍລະນີຊື້ກິດຈະການທັງໝົດ ພາຍຫຼັງຜູ້ຊື້ກິດຈະການ ຊຳລະຄ່າຊື້ກິດຈະການສຳເລັດແລ້ວ ຜູ້ຄວບຄຸມຊັບສິນ ຕ້ອງສະເໜີຕໍ່ສານ ເພື່ອພິຈາລະນາອອກຄຳສັ່ງຊັດມ້ຽນຄະດີ ແລະ ໃຫ້ຜູ້ຊື້ກິດຈະການດຳເນີນການປ່ຽນແປງທະບຽນວິສາຫະກິດ ຕາມກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 31 (ໃໝ່) ການນຳໃຊ້ມາດຕະການ**

ໃນໄລຍະດຳເນີນຄະດີຟື້ນຟູ ຫຼື ລົ້ມລະລາຍ ຜູ້ຄວບຄຸມຊັບສິນ ສາມາດນຳໃຊ້ມາດຕະການໃດໜຶ່ງ ເພື່ອປົກປັກຮັກສາຊັບສິນຂອງວິສາຫະກິດລູກໜີ້, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງເຈົ້າໜີ້ ແລະ ບຸກຄົນອື່ນທີ່ກ່ຽວຂ້ອງ ໃນກໍລະນີຈຳເປັນ ແລະ ຮີບດ່ວນ ເປັນຕົ້ນ ການຂາຍຊັບສິ່ງຂອງທີ່ຈະເສື່ອມຄຸນ ຫຼື ໃກ້ໝົດອາຍຸການນຳໃຊ້, ການຈັດເກັບ, ການຫຸ້ມຫໍ່ຊັບສິນ ແຕ່ຕ້ອງລາຍງານໃຫ້ສານ.

ໃນກໍລະນີຈຳເປັນ ຜູ້ຄວບຄຸມຊັບສິນ ສາມາດຮ້ອງຂໍໃຫ້ສານ ພິຈາລະນາອອກຄຳສັ່ງນຳໃຊ້ມາດຕະການໃດໜຶ່ງ ເພື່ອປົກປັກຮັກສາຊັບສິນຂອງວິສາຫະກິດລູກໜີ້ ເປັນຕົ້ນ ການກວດຄົ້ນສະຖານທີ່, ການຍຶດ ຫຼື ອາຍັດຊັບ, ການຂາຍຊັບສິນ.

ໃນກໍລະນີເຈົ້າໜີ້ ຫຼື ວິສາຫະກິດລູກໜີ້ ຄັດຄ້ານ ຫຼື ບໍ່ເຫັນດີຕໍ່ການນຳໃຊ້ມາດຕະການດັ່ງກ່າວ ກໍສາມາດສະເໜີໃຫ້ສານ ພິຈາລະນາຍົກເລີກການນຳໃຊ້ມາດຕະການ ພາຍໃນເວລາ ເຈັດວັນ ນັບແຕ່ວັນໄດ້ຮັບຊາບຄຳສັ່ງເປັນຕົ້ນໄປ.

ຄຳສັ່ງຂອງສານຂັ້ນອຸທອນກ່ຽວກັບການນຳໃຊ້ມາດຕະການ ເປັນຄຳສັ່ງທີ່ໃຊ້ໄດ້ຢ່າງເດັດຂາດ.

## ພາກທີ III
## ຜູ້ຄວບຄຸມຊັບສິນ

**ມາດຕາ 32 (ໃໝ່) ຜູ້ຄວບຄຸມຊັບສິນ**

ຜູ້ຄວບຄຸມຊັບສິນ ແມ່ນ ຜູ້ທີ່ໄດ້ຮັບອະນຸຍາດໃຫ້ເຄື່ອນໄຫວວິຊາຊີບໃນການຄວບຄຸມ, ຄຸ້ມຄອງ ແລະ/ຫຼື ບໍລິຫານຊັບສິນຂອງວິສາຫະກິດລູກໜີ້ ແລະ ຊຳລະສະສາງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້.

ວິສາຫະກິດໃດໜຶ່ງ ກໍສາມາດເຄື່ອນໄຫວໃຫ້ບໍລິການກ່ຽວກັບການຄວບຄຸມຊັບສິນໄດ້ ແຕ່ຕ້ອງມີຜູ້ຄວບຄຸມຊັບສິນສັງກັດຢູ່ໃນວິສາຫະກິດຕົນ.

**ມາດຕາ 33 (ໃໝ່) ມາດຕະຖານ ແລະ ເງື່ອນໄຂຂອງຜູ້ຄວບຄຸມຊັບສິນ**

ບຸກຄົນທີ່ຈະເປັນຜູ້ຄວບຄຸມຊັບສິນ ຕ້ອງມີມາດຕະຖານ ແລະ ເງື່ອນໄຂ ດັ່ງນີ້:

1. ມີລະດັບການສຶກສາດ້ານ ກົດໝາຍ, ການບັນຊີ, ການກວດສອບ ຫຼື ການບໍລິຫານທຸລະກິດ ຊັ້ນປະລິນຍາຕີຂຶ້ນໄປ ແລະ ໄດ້ຜ່ານວຽກງານໃນດ້ານດັ່ງກ່າວ ຢ່າງໜ້ອຍ ສາມ ປີ;
2. ໄດ້ຜ່ານການຝຶກອົບຮົມວິຊາຊີບການຄວບຄຸມຊັບສິນ;
3. ບໍ່ແມ່ນພະນັກງານ-ລັດຖະກອນ, ທະຫານ ຫຼື ຕຳຫຼວດ ທີ່ຍັງປະຕິບັດໜ້າທີ່ຢູ່;
4. ບໍ່ເຄີຍຖືກລົງວິໄນໃຫ້ອອກຈາກລັດຖະການ ຫຼື ສານຕັດສິນລົງໂທດຕັດອິດສະລະພາບຍ້ອນການກະທຳຜິດໂດຍເຈດຕະນາ;

5. ມີສຸຂະພາບດີ.

### ມາດຕາ 34 (ໃໝ່) ການອະນຸຍາດ ແລະ ບັນຊີຜູ້ຄວບຄຸມຊັບສິນ

ຜູ້ທີ່ມີຈຸດປະສົງເປັນຜູ້ຄວບຄຸມຊັບສິນ ໃຫ້ຍື່ນຄຳຮ້ອງພ້ອມດ້ວຍເອກະສານຢັ້ງຢືນມາດຕະຖານ ແລະ ເງື່ອນໄຂ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 33 ຂອງກົດໝາຍສະບັບນີ້ ຕໍ່ກະຊວງຍຸຕິທຳ ເພື່ອພິຈາລະນາອະນຸຍາດ ເປັນຜູ້ຄວບຄຸມຊັບສິນ.

ກະຊວງຍຸຕິທຳ ຕ້ອງສ້າງບັນຊີຜູ້ຄວບຄຸມຊັບສິນ ເພື່ອເຜີຍແຜ່ໃຫ້ສັງຄົມ ແລະ ເປັນຂໍ້ມູນໃຫ້ສານ ໃນການພິຈາລະນາແຕ່ງຕັ້ງຜູ້ຄວບຄຸມຊັບສິນໃຫ້ຮັບຜິດຊອບຄະດີຟື້ນຟູ ຫຼື ລົ້ມລະລາຍຂອງວິສາຫະກິດໃດໜຶ່ງ.

### ມາດຕາ 35 (ປັບປຸງ) ສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບຂອງຜູ້ຄວບຄຸມຊັບສິນ

ຜູ້ຄວບຄຸມຊັບສິນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ກວດກາ, ລວບລວມ ແລະ ຂຶ້ນບັນຊີຊັບສິນທັງໝົດຂອງວິສາຫະກິດລູກໜີ້;
2. ສັງລວມໜີ້ຕ້ອງສົ່ງ ແລະ ໜີ້ຕ້ອງຮັບທັງໝົດຂອງວິສາຫະກິດລູກໜີ້ ພ້ອມທັງສ້າງບັນຊີລາຍຊື່ເຈົ້າໜີ້, ລູກໜີ້ ແລະ ຈຳນວນໜີ້ຕ້ອງສົ່ງ ແລະ ໜີ້ຕ້ອງຮັບ;
3. ກວດສອບສະຖານະທາງດ້ານການເງິນຂອງວິສາຫະກິດລູກໜີ້ ແລ້ວລາຍງານຕໍ່ສານ ແລະ ກອງປະຊຸມເຈົ້າໜີ້;
4. ຊ່ວຍວິສາຫະກິດລູກໜີ້ໃນການປະສານງານ, ຮ່າງ ແລະ ເຈລະຈາ ຂໍ້ສະເໜີແກ້ໄຂໜີ້ສິນສຳລັບການຟື້ນຟູວິສາຫະກິດຂະໜາດນ້ອຍ ແລະ ຈຸນລະວິສາຫະກິດ;
5. ມີຄຳເຫັນຕໍ່ແຜນຟື້ນຟູວິສາຫະກິດ ຫຼື ກະກຽມແຜນຟື້ນຟູວິສາຫະກິດ ຕາມການຮ້ອງຂໍຂອງວິສາຫະກິດລູກໜີ້ ຫຼື ເຈົ້າໜີ້ ລວມທັງການຊ່ວຍຊອກຫາແຫຼ່ງທຶນເພື່ອນຳໃຊ້ເຂົ້າໃນການຟື້ນຟູວິສາຫະກິດ;
6. ຕິດຕາມ ກວດກາ ການດຳເນີນທຸລະກິດຂອງວິສາຫະກິດລູກໜີ້ ຫຼື ຄຸ້ມຄອງ, ບໍລິຫານວິສາຫະກິດລູກໜີ້ ໃນກໍລະນີຜູ້ບໍລິຫານວິສາຫະກິດລູກໜີ້ ບໍ່ໄດ້ຮັບຄວາມເຊື່ອໝັ້ນ ຈົນກວ່າມີຜູ້ບໍລິຫານໃໝ່ປ່ຽນແທນ;
7. ຕົກລົງກ່ຽວກັບການນຳໃຊ້ຊັບສິນ ແລະ ການໃຊ້ຈ່າຍຂອງວິສາຫະກິດລູກໜີ້ ຕາມແຜນການທີ່ສານອະນຸມັດ;
8. ກວດກາສິດທວງ ແລະ ມູນຄ່າສິດທວງຂອງເຈົ້າໜີ້;
9. ສ້າງແຜນຊຳລະສະສາງຊັບສິນ ແລະ ໜີ້ສິນຂອງວິສາຫະກິດລູກໜີ້ ໃນຄະດີລົ້ມລະລາຍ;
10. ສະເໜີສານ ພິຈາລະນານຳໃຊ້ມາດຕະການ ເພື່ອປົກປັກຮັກສາຊັບສິນຂອງວິສາຫະກິດລູກໜີ້;
11. ຮຽກ ແລະ ກະກຽມຈັດກອງປະຊຸມເຈົ້າໜີ້;
12. ລາຍງານການເຄື່ອນໄຫວຂອງຕົນ ໃຫ້ສານ ແລະ ກອງປະຊຸມເຈົ້າໜີ້ ເປັນແຕ່ລະໄລຍະ;
13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ຜູ້ຄວບຄຸມຊັບສິນ ຕ້ອງເຄື່ອນໄຫວວຽກງານຂອງຕົນ ດ້ວຍຄວາມເອົາໃຈໃສ່, ຄວາມບໍລິສຸດໃຈ, ຢູ່ພາຍໃຕ້ການຊີ້ນຳ ແລະ ຄຸ້ມຄອງຂອງສານ ແລະ ມີຄວາມຮັບຜິດຊອບຕໍ່ການເຄື່ອນໄຫວວຽກງານຂອງຕົນທີ່ລະເມີດກົດໝາຍສະບັບນີ້ ແລະ ກົດໝາຍອື່ນ ຊຶ່ງພາໃຫ້ມີຄວາມເສຍຫາຍເກີດຂຶ້ນ ລວມທັງຖືກດຳເນີນຄະດີຕາມກົດໝາຍ.

**ມາດຕາ 36 (ໃໝ່) ຄ່າແຮງງານ ແລະ/ຫຼື ຄ່າໃຊ້ຈ່າຍໃຫ້ແກ່ຜູ້ຄວບຄຸມຊັບສິນ**

ຄ່າແຮງງານ ແລະ/ຫຼື ຄ່າໃຊ້ຈ່າຍໃຫ້ແກ່ຜູ້ຄວບຄຸມຊັບສິນ ເປັນຄວາມຮັບຜິດຊອບຂອງວິສາຫະກິດລູກໜີ້ ຕາມການກຳນົດຂອງສານ ບົນພື້ນຖານການເຫັນດີຂອງກອງປະຊຸມເຈົ້າໜີ້.

## ພາກທີ IV
## ກອງປະຊຸມເຈົ້າໜີ້

**ມາດຕາ 37 (ປັບປຸງ) ການຮຽກປະຊຸມເຈົ້າໜີ້**

ຜູ້ພິພາກສາທີ່ຖືກມອບໝາຍ ເປັນຜູ້ຮຽກປະຊຸມເຈົ້າໜີ້ຄັ້ງທຳອິດ ພາຍໃນເວລາ ສາມສິບວັນ ນັບແຕ່ວັນຖືກມອບໝາຍເປັນຕົ້ນໄປ ເພື່ອພິຈາລະນາຮັບຮອງການແຕ່ງຕັ້ງຜູ້ຄວບຄຸມຊັບສິນ ລວມທັງຄ່າແຮງງານ ແລະ/ຫຼື ຄ່າໃຊ້ຈ່າຍໃຫ້ຜູ້ກ່ຽວ, ຕົກລົງໃຫ້ວິສາຫະກິດລູກໜີ້ຟື້ນຟູ ຫຼື ລົ້ມລະລາຍ, ການຄອບຄອງໂດຍວິສາຫະກິດລູກໜີ້, ການກວດກາການອ້າງສິດທວງໜີ້, ຈຳນວນໜີ້ ແລະ ບັນຫາອື່ນທີ່ສຳຄັນ.

ກອງປະຊຸມເຈົ້າໜີ້ຄັ້ງຕໍ່ໄປ ສາມາດຮຽກປະຊຸມເວລາໃດກໍໄດ້ ທີ່ເຫັນວ່າຈຳເປັນ ໂດຍຜູ້ຄວບຄຸມຊັບສິນ, ຄະນະກຳມະການເຈົ້າໜີ້ ຫຼື ເຈົ້າໜີ້ ຊຶ່ງມີມູນຄ່າໜີ້ສິນ ກວມເອົາຢ່າງໜ້ອຍ ໜຶ່ງສ່ວນສີ່ ຂອງຈຳນວນໜີ້ສິນທັງໝົດ ເພື່ອພິຈາລະນາແຜນຟື້ນຟູວິສາຫະກິດ, ແຜນການຊຳລະສະສາງ ແລະ ບັນຫາອື່ນທີ່ສຳຄັນ.

ໝາຍນັດ ແລະ ວາລະກອງປະຊຸມ ພ້ອມດ້ວຍເອກະສານທີ່ກ່ຽວຂ້ອງ ຕ້ອງສົ່ງໃຫ້ຜູ້ມີສິດ ແລະ ພັນທະເຂົ້າຮ່ວມກອງປະຊຸມເຈົ້າໜີ້ ຢ່າງໜ້ອຍ ສາມວັນ ກ່ອນວັນເປີດກອງປະຊຸມ.

ກອງປະຊຸມເຈົ້າໜີ້ ຈະເປີດຂຶ້ນໄດ້ກໍຕໍ່ເມື່ອມີເຈົ້າໜີ້ເຂົ້າຮ່ວມກອງປະຊຸມຫຼາຍກວ່າເຄິ່ງໜຶ່ງ ຊຶ່ງມີມູນຄ່າໜີ້ສິນກວມເອົາຢ່າງໜ້ອຍ ສອງສ່ວນສາມ ຂອງຈຳນວນໜີ້ສິນທັງໝົດ.

**ມາດຕາ 38 (ໃໝ່) ຜູ້ມີສິດ ແລະ ພັນທະ ເຂົ້າຮ່ວມກອງປະຊຸມເຈົ້າໜີ້**

ຜູ້ມີສິດເຂົ້າຮ່ວມກອງປະຊຸມເຈົ້າໜີ້ ມີ ດັ່ງນີ້:

1. ຜູ້ມີສິດຮ້ອງຟ້ອງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 10 ຂອງກົດໝາຍສະບັບນີ້;
2. ຜູ້ພິພາກສາທີ່ຖືກມອບໝາຍ;
3. ຜູ້ຕາງໜ້າຜູ້ອອກແຮງງານ ຫຼື ສະຫະພັນກຳມະບານ.

ຜູ້ມີພັນທະເຂົ້າຮ່ວມກອງປະຊຸມເຈົ້າໜີ້ ມີ ດັ່ງນີ້:

1. ຜູ້ຄວບຄຸມຊັບສິນ;
2. ເຈົ້າຂອງ ຫຼື ຜູ້ຕາງໜ້າວິສາຫະກິດລູກໜີ້ ຕາມການແຈ້ງຂອງຜູ້ຄວບຄຸມຊັບສິນ ຫຼື ເຈົ້າໜີ້.

**ມາດຕາ 39 (ປັບປຸງ) ສິດ ແລະ ໜ້າທີ່ຂອງກອງປະຊຸມເຈົ້າໜີ້**

ກອງປະຊຸມເຈົ້າໜີ້ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັບຮອງການແຕ່ງຕັ້ງ ຫຼື ສະເໜີປ່ຽນແທນ ຜູ້ຄວບຄຸມຊັບສິນ ລວມທັງພິຈາລະນາຄ່າແຮງງານ ແລະ/ຫຼື ຄ່າໃຊ້ຈ່າຍ ໃຫ້ຜູ້ກ່ຽວ;
2. ກວດກາການອ້າງສິດທວງໜີ້ຂອງເຈົ້າໜີ້ ແລະ ຈຳນວນໜີ້;
3. ຮັບຮອງການຈັດແບ່ງປະເພດເຈົ້າໜີ້ ແລະ ຈຳນວນໜີ້ ເປັນຕົ້ນ ເຈົ້າໜີ້ທີ່ມີການຄ້ຳປະກັນ, ເຈົ້າໜີ້ບໍ່ມີການຄ້ຳປະກັນ, ຜູ້ອອກແຮງງານ;

4. ຮັບຮອງບັນຊີຊັບສິນ ແລະ ໜີ້ສິນຂອງວິສາຫະກິດລູກໜີ້;

5. ຮັບຟັງການລາຍງານຂອງຜູ້ຄວບຄຸມຊັບສິນ ແລະ ຜູ້ຕາງໜ້າວິສາຫະກິດລູກໜີ້ກ່ຽວກັບສະຖານະທາງດ້ານການເງິນ ແລະ ສະພາບການດຳເນີນທຸລະກິດ;

6. ພິຈາລະນາໃຫ້ວິສາຫະກິດລູກໜີ້ ຟື້ນຟູ ຫຼື ລົ້ມລະລາຍ ລວມທັງການຄອບຄອງວິສາຫະກິດໂດຍວິສາຫະກິດລູກໜີ້;

7. ຕົກລົງໃຫ້ຂາຍກິດຈະການຂອງວິສາຫະກິດລູກໜີ້ ສ່ວນໃດສ່ວນໜຶ່ງ ຫຼື ທັງໝົດ;

8. ຕິດຕາມ ກວດກາ ການເຄື່ອນໄຫວທຸລະກິດຂອງວິສາຫະກິດລູກໜີ້ ແລະ ການເຄື່ອນໄຫວຂອງຜູ້ຄວບຄຸມຊັບສິນ;

9. ຮັບຮອງຂໍ້ສະເໜີແກ້ໄຂໜີ້ສິນ, ແຜນຟື້ນຟູວິສາຫະກິດ ຫຼື ແຜນຊຳລະສະສາງ;

10. ຄັດຄ້ານການຊື້ຂາດຊັບສິນໃດໜຶ່ງຂອງວິສາຫະກິດລູກໜີ້;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

### ມາດຕາ 40 (ປັບປຸງ) ມະຕິກອງປະຊຸມເຈົ້າໜີ້

ມະຕິກອງປະຊຸມເຈົ້າໜີ້ ຈະມີຜົນໃຊ້ໄດ້ກໍຕໍ່ເມື່ອຫາກໄດ້ຮັບຄະແນນສຽງສ່ວນຫຼາຍຂອງເຈົ້າໜີ້ທີ່ເຂົ້າຮ່ວມກອງປະຊຸມ ຊຶ່ງມີມູນຄ່າໜີ້ສິນ ກວມເອົາຢ່າງໜ້ອຍ ສອງສ່ວນສາມ ຂອງຈຳນວນໜີ້ສິນທັງໝົດ.

ຖ້າເຈົ້າໜີ້ໃດໜຶ່ງ ຫາກເຫັນວ່າມະຕິກອງປະຊຸມເຈົ້າໜີ້ ສ້າງຄວາມເສຍປະໂຫຍດໃຫ້ແກ່ຕົນ ກໍມີສິດສະເໜີຕໍ່ສານ ເພື່ອພິຈາລະນາຕັດສິນລົບລ້າງມະຕິດັ່ງກ່າວ ແລ້ວສະເໜີໃຫ້ກອງປະຊຸມເຈົ້າໜີ້ພິຈາລະນາຄືນໃໝ່ກ່ຽວກັບບັນຫາດັ່ງກ່າວ.

ມະຕິກອງປະຊຸມເຈົ້າໜີ້ ມີຜົນບັງຄັບປະຕິບັດຕໍ່ເຈົ້າໜີ້ທຸກຄົນ.

### ມາດຕາ 41 (ປັບປຸງ) ຮູບການຕົກລົງຂອງກອງປະຊຸມເຈົ້າໜີ້

ກອງປະຊຸມເຈົ້າໜີ້ ສາມາດຕົກລົງໃຫ້ວິສາຫະກິດລູກໜີ້ ດຳເນີນຕາມຮູບການໃດໜຶ່ງ ດັ່ງນີ້:

1. ການຟື້ນຟູວິສາຫະກິດ;
2. ການລົ້ມລະລາຍ;
3. ການຂາຍກິດຈະການສ່ວນໃດໜຶ່ງ ຫຼື ທັງໝົດ.

ທຸກການຕົກລົງຂອງກອງປະຊຸມເຈົ້າໜີ້ ຕ້ອງສະເໜີໃຫ້ສານຮັບຮອງ.

### ມາດຕາ 42 (ໃໝ່) ຄະນະກຳມະການເຈົ້າໜີ້

ໃນກໍລະນີວິສາຫະກິດລູກໜີ້ ເປັນວິສາຫະກິດຂະໜາດໃຫຍ່ ຫຼື ມີເຈົ້າໜີ້ຫຼາຍຄົນ ກອງປະຊຸມເຈົ້າໜີ້ ສາມາດແຕ່ງຕັ້ງຄະນະກຳມະການເຈົ້າໜີ້ ທີ່ປະກອບດ້ວຍສະມາຊິກ ສາມ ຫາ ຫ້າ ຄົນ ຊຶ່ງແມ່ນເຈົ້າໜີ້ ຫຼື ບຸກຄົນອື່ນ ເພື່ອຕາງໜ້າໃຫ້ແກ່ເຈົ້າໜີ້ ໃນການປົກປ້ອງສິດ ແລະ ຜົນປະໂຫຍດຂອງເຈົ້າໜີ້, ຊຸກຍູ້, ຕິດຕາມ ແລະ ກວດກາ ການປະຕິບັດມະຕິກອງປະຊຸມເຈົ້າໜີ້.

### ມາດຕາ 43 (ໃໝ່) ສິດ ແລະ ໜ້າທີ່ຂອງຄະນະກຳມະການເຈົ້າໜີ້

ຄະນະກຳມະການເຈົ້າໜີ້ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ກວດກາ ຊັບສິນ, ໜີ້ສິນ, ສະຖານະທາງດ້ານການເງິນ ແລະ ຄວາມສາມາດໃນການສືບຕໍ່ດຳເນີນທຸລະກິດຂອງວິສາຫະກິດລູກໜີ້;

2. ຕິດຕາມ ແລະ ກວດກາ ການເຄື່ອນໄຫວທຸລະກິດຂອງວິສາຫະກິດລູກໜີ້ ແລະ ການເຄື່ອນໄຫວຂອງຜູ້ຄວບຄຸມຊັບສິນ;

3. ຕິດຕາມ ແລະ ກວດກາ ການຄຸ້ມຄອງ ແລະ ການນຳໃຊ້ຊັບສິນຂອງວິສາຫະກິດລູກໜີ້;

4. ຕິດຕາມ ແລະ ກວດກາ ການຊຳລະສະສາງ;

5. ຮຽກເປີດກອງປະຊຸມເຈົ້າໜີ້;

6. ມີຄຳເຫັນຕໍ່ແຜນຟື້ນຟູວິສາຫະກິດ ຫຼື ແຜນຊຳລະສະສາງ ທີ່ວິສາຫະກິດລູກໜີ້ ແລະ/ຫຼື ຜູ້ຄວບຄຸມຊັບສິນສະເໜີ ແລະ ສະເໜີແຜນຟື້ນຟູວິສາຫະກິດຂອງຕົນ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງກອງປະຊຸມເຈົ້າໜີ້.

## ພາກທີ V
## ການຟື້ນຟູວິສາຫະກິດ

### ມາດຕາ 44 (ໃໝ່) ການສືບຕໍ່ດຳເນີນທຸລະກິດຂອງວິສາຫະກິດລູກໜີ້

ພາຍຫຼັງມີຄຳສັ່ງເປີດການພິຈາລະນາຄະດີຟື້ນຟູ ຫຼື ກອງປະຊຸມເຈົ້າໜີ້ ມີມະຕິໃຫ້ຟື້ນຟູວິສາຫະກິດແລ້ວ ວິສາຫະກິດລູກໜີ້ ສາມາດສືບຕໍ່ດຳເນີນທຸລະກິດຂອງຕົນ ດ້ວຍຮູບການຄອບຄອງໂດຍວິສາຫະກິດລູກໜີ້ ຫຼື ການຄອບຄອງ ແລະ ບໍລິຫານໂດຍຜູ້ຄວບຄຸມຊັບສິນ ຫຼື ຜູ້ອື່ນ ທີ່ໄດ້ຮັບການແຕ່ງຕັ້ງຈາກສານ ຕາມການສະເໜີຂອງຄະນະກຳມະການເຈົ້າໜີ້ ຫຼື ກອງປະຊຸມເຈົ້າໜີ້ ໃນກໍລະນີເຈົ້າໜີ້ ບໍ່ເຊື່ອໝັ້ນໃຫ້ວິສາຫະກິດລູກໜີ້ ບໍລິຫານທຸລະກິດຕໍ່ໄປ.

ໃນກໍລະນີວິສາຫະກິດລູກໜີ້ ຫາກເປັນຜູ້ຄອບຄອງ ແລະ ບໍລິຫານທຸລະກິດ ທຸກການເຄື່ອນໄຫວດຳເນີນທຸລະກິດທີ່ມີຄວາມສຳຄັນ ຊຶ່ງອາດກະທົບຕໍ່ຄວາມສາມາດຊຳລະໜີ້ ຫຼື ການຫຼຸດມູນຄ່າຊັບສິນລົງ ຕ້ອງໄດ້ຂໍອະນຸມັດຈາກຜູ້ຄວບຄຸມຊັບສິນ ແລະ ຕ້ອງລາຍງານໃຫ້ສານ.

ບໍ່ອະນຸຍາດໃຫ້ວິສາຫະກິດລູກໜີ້ ມີການກະທຳໃດໜຶ່ງ ດັ່ງນີ້:

1. ຊຸກເຊື່ອງຊັບສິນຂອງວິສາຫະກິດລູກໜີ້ ດ້ວຍຮູບການຕ່າງໆ;

2. ຊຳລະໜີ້ສິນທີ່ບໍ່ມີການຄ້ຳປະກັນ, ຍົກເວັ້ນໜີ້ສິນທີ່ເກີດຂຶ້ນຫຼັງການຄວບຄຸມຊັບສິນ, ຊຳລະເງິນເດືອນ ຫຼື ຄ່າແຮງງານຂອງຜູ້ອອກແຮງງານ, ຄ່າແຮງງານ ແລະ/ຫຼື ຄ່າໃຊ້ຈ່າຍໃຫ້ຜູ້ຄວບຄຸມຊັບສິນ;

3. ສະລະສິດ ຫຼື ບໍ່ທວງສິດຕໍ່ໜີ້ຕ້ອງຮັບ;

4. ປ່ຽນແປງໜີ້ທີ່ບໍ່ມີການຄ້ຳປະກັນ ເປັນໜີ້ທີ່ມີການຄ້ຳປະກັນທັງໝົດ ຫຼື ບາງສ່ວນ.

ຖ້າເຈົ້າໜີ້, ຜູ້ຄວບຄຸມຊັບສິນ ຫາກເຫັນວ່າຜູ້ບໍລິຫານວິສາຫະກິດລູກໜີ້ ບໍ່ມີຄວາມສາມາດທີ່ຈະດຳເນີນທຸລະກິດ ຫຼື ມີການກະທຳ ຕາມຂໍ້ 1 ຫາ ຂໍ້ 4 ຂອງມາດຕານີ້ ກໍມີສິດສະເໜີໃຫ້ສານ ພິຈາລະນາຕັດສິນປົດຜູ້ກ່ຽວແລ້ວແຕ່ງຕັ້ງຜູ້ໃໝ່ແທນ ພ້ອມທັງຮັບຜິດຊອບຕໍ່ຄວາມເສຍຫາຍ ຫຼື ຖືກດຳເນີນຄະດີຕາມແຕ່ລະກໍລະນີ.

### ມາດຕາ 45 (ໃໝ່) ການຍົກເລີກ ຫຼື ການສືບຕໍ່ສັນຍາ

ສັນຍາ ທີ່ເຮັດຂຶ້ນກ່ອນມີຄຳສັ່ງເປີດການພິຈາລະນາຄະດີຟື້ນຟູ ລະຫວ່າງວິສາຫະກິດລູກໜີ້ກັບຄູ່ຮ່ວມທຸລະກິດອື່ນ ທີ່ຍັງບໍ່ທັນປະຕິບັດເຕັມສ່ວນ ໃຫ້ຜູ້ຄວບຄຸມຊັບສິນ ພິຈາລະນາຕົກລົງວ່າຈະຍົກເລີກ ຫຼື ສືບຕໍ່ປະຕິບັດສັນຍາດັ່ງກ່າວ ຊຶ່ງຕ້ອງໄດ້ແຈ້ງການຕົກລົງນັ້ນໃຫ້ຄູ່ສັນຍາອີກຝ່າຍໜຶ່ງ.

ໃນກໍລະນີມີການແຈ້ງໃຫ້ຍົກເລີກສັນຍາ ຖ້າຄູ່ສັນຍາອີກຝ່າຍໜຶ່ງ ຫາກບໍ່ເຫັນດີນຳການຍົກເລີກດັ່ງກ່າວ ກໍໃຫ້ສະເໜີຕໍ່ສານ ພາຍໃນເວລາ ສິບຫ້າວັນ ນັບແຕ່ວັນໄດ້ຮັບແຈ້ງເປັນຕົ້ນໄປ ເພື່ອພິຈາລະນາກ່ຽວກັບການສືບຕໍ່ການປະຕິບັດສັນຍາ. ເມື່ອມີການຍົກເລີກສັນຍາ ຖ້າຄູ່ສັນຍາຫາກບໍ່ໄດ້ຮັບການປະຕິບັດພັນທະ, ມີຄວາມເສຍຫາຍ ກໍໃຫ້ຖືເປັນເຈົ້າໜີ້ຜູ້ໜຶ່ງໃນຄະດີຟື້ນຟູນັ້ນ.

ທຸກໜີ້ສິນທີ່ເກີດຂຶ້ນຈາກການສືບຕໍ່ປະຕິບັດສັນຍາ ຕ້ອງໄດ້ຮັບການຊຳລະໃນໄລຍະດຳເນີນຄະດີຟື້ນຟູວິສາຫະກິດ ຫຼື ໄດ້ຮັບບຸລິມະສິດໃນການຊຳລະສະສາງ.

**ມາດຕາ 46 (ໃໝ່) ການຊອກຫາແຫຼ່ງທຶນ**

ວິສາຫະກິດລູກໜີ້ ແລະ/ຫຼື ຜູ້ຄວບຄຸມຊັບສິນ ສາມາດຊອກຫາແຫຼ່ງທຶນ ເພື່ອນຳໃຊ້ເຂົ້າໃນການຟື້ນຟູວິສາຫະກິດດ້ວຍການກູ້ຢືມ ໂດຍເອົາຊັບສິນຂອງວິສາຫະກິດລູກໜີ້ທີ່ບໍ່ທັນໄດ້ຄ້ຳປະກັນໜີ້ສິນ ໄປຄ້ຳປະກັນການກູ້ຢືມ ຫຼື ເອົາບຸລິມະສິດໄດ້ຮັບການໃຊ້ແທນໜີ້ສິນ ເປັນສິ່ງຄ້ຳປະກັນ.

ແຫຼ່ງທຶນທີ່ຈະນຳໃຊ້ເຂົ້າໃນການຟື້ນຟູວິສາຫະກິດ ຕ້ອງໄດ້ກຳນົດໃນແຜນຟື້ນຟູວິສາຫະກິດ ແລະ ນຳສະເໜີຜ່ານກອງປະຊຸມເຈົ້າໜີ້ ເພື່ອພິຈາລະນາ.

ຕົ້ນທຶນ ແລະ ດອກເບ້ຍຈາກການກູ້ຢືມ ຕ້ອງໄດ້ຮັບບຸລິມະສິດໃນການໃຊ້ແທນໜີ້ສິນຕໍ່ຈາກເງິນເດືອນ ຫຼື ຄ່າແຮງງານຂອງຜູ້ອອກແຮງງານ.

**ມາດຕາ 47 (ໃໝ່) ການສະເໜີແຜນຟື້ນຟູວິສາຫະກິດ**

ວິສາຫະກິດລູກໜີ້ ແລະ/ຫຼື ຜູ້ຄວບຄຸມຊັບສິນ ຕ້ອງສ້າງ ແລະ ສະເໜີແຜນຟື້ນຟູວິສາຫະກິດຕໍ່ສານ ແລະ ກອງປະຊຸມເຈົ້າໜີ້ ພາຍໃນເວລາ ເກົ້າສິບວັນ ນັບແຕ່ວັນທີ່ສານຮັບຮອງມະຕິກອງປະຊຸມເຈົ້າໜີ້ໃຫ້ຟື້ນຟູວິສາຫະກິດເປັນຕົ້ນໄປ.

ເຈົ້າໜີ້ ຫຼື ຄະນະກຳມະການເຈົ້າໜີ້ ກໍສາມາດສະເໜີແຜນຂອງຕົນກ່ຽວກັບການຟື້ນຟູວິສາຫະກິດລູກໜີ້.

**ມາດຕາ 48 (ໃໝ່) ເນື້ອໃນແຜນຟື້ນຟູວິສາຫະກິດ**

ແຜນຟື້ນຟູວິສາຫະກິດ ມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ແຜນດຳເນີນທຸລະກິດຂອງວິສາຫະກິດລູກໜີ້ ເປັນຕົ້ນ ແຫຼ່ງທຶນທີ່ຈະນຳໃຊ້ໃນການຟື້ນຟູວິສາຫະກິດ, ການປັບປຸງການຈັດຕັ້ງ ແລະ ການບໍລິຫານ, ການຂາຍ, ການໂອນ ຊັບສິນ ຫຼື ບາງກິດຈະການ ຂອງວິສາຫະກິດລູກໜີ້;
2. ການຈັດປະເພດເຈົ້າໜີ້;
3. ການປັບປຸງໂຄງສ້າງໜີ້;
4. ການຊຳລະໜີ້ສິນ;
5. ກຳນົດເວລາໃນການຈັດຕັ້ງປະຕິບັດແຜນຟື້ນຟູວິສາຫະກິດ.

**ມາດຕາ 49 (ໃໝ່) ການພິຈາລະນາແຜນຟື້ນຟູວິສາຫະກິດໂດຍກອງປະຊຸມເຈົ້າໜີ້**

ຜູ້ຄວບຄຸມຊັບສິນ ຕ້ອງຮຽກເປີດກອງປະຊຸມເຈົ້າໜີ້ ເພື່ອພິຈາລະນາແຜນຟື້ນຟູວິສາຫະກິດ ພາຍໃນເວລາ ເຈັດວັນ ນັບແຕ່ວັນທີ່ສານໄດ້ຮັບແຜນຟື້ນຟູວິສາຫະກິດເປັນຕົ້ນໄປ ພ້ອມທັງເປັນປະທານກອງປະຊຸມເຈົ້າໜີ້, ຍົກເວັ້ນກອງປະຊຸມເຈົ້າໜີ້ ຫາກໄດ້ເລືອກປະທານກອງປະຊຸມເອງ.

ວິສາຫະກິດລູກໜີ້ ຫຼື ຜູ້ສະເໜີແຜນຟື້ນຟູວິສາຫະກິດ ມີຄວາມຮັບຜິດຊອບໃນການສະເໜີແຜນດັ່ງກ່າວ ຕໍ່ກອງປະຊຸມເຈົ້າໜີ້ ພ້ອມທັງອະທິບາຍ, ຊີ້ແຈງ ແລະ ຕອບຂໍ້ຂ້ອງໃຈ ທີ່ເຈົ້າໜີ້, ຜູ້ຄວບຄຸມຊັບສິນ ຫຼື ຜູ້ຮ້ອງຟ້ອງອື່ນ ໄດ້ຍົກຂຶ້ນໃນກອງປະຊຸມເຈົ້າໜີ້.

ແຜນຟື້ນຟູວິສາຫະກິດ ຈະຖືກຮັບຮອງໂດຍກອງປະຊຸມເຈົ້າໜີ້ ກໍຕໍ່ເມື່ອໄດ້ຮັບຄະແນນສຽງເຫັນດີເກີນກວ່າເຄິ່ງໜຶ່ງຂອງເຈົ້າໜີ້ ຫຼື ຜູ້ຕາງໜ້າ ທີ່ເຂົ້າຮ່ວມກອງປະຊຸມ ຊຶ່ງມີມູນຄ່າໜີ້ສິນກວມເອົາ ຢ່າງໜ້ອຍສອງສ່ວນສາມ ຂອງຈຳນວນໜີ້ສິນທັງໝົດ, ໃນນັ້ນ ຕ້ອງໄດ້ຮັບຄະແນນສຽງເຫັນດີ ຈາກທັງເຈົ້າໜີ້ທີ່ມີການຄ້ຳປະກັນ ແລະ ເຈົ້າໜີ້ທີ່ບໍ່ມີການຄ້ຳປະກັນ.

ສຳລັບເຈົ້າໜີ້ ທີ່ບໍ່ສາມາດເຂົ້າຮ່ວມກອງປະຊຸມ ແຕ່ໄດ້ສົ່ງຄຳເຫັນເປັນລາຍລັກອັກສອນ ຊຶ່ງໄດ້ກຳນົດຢ່າງຊັດເຈນກ່ຽວກັບການຮັບຮອງ ຫຼື ບໍ່ຮັບຮອງແຜນຟື້ນຟູນັ້ນ ກໍໃຫ້ຖືວ່າເຈົ້າໜີ້ຄົນດັ່ງກ່າວ ໄດ້ເຂົ້າຮ່ວມກອງປະຊຸມ.

ໃນກໍລະນີກອງປະຊຸມເຈົ້າໜີ້ ມີມະຕິຮັບຮອງແຜນຟື້ນຟູວິສາຫະກິດ ແຕ່ເຈົ້າໜີ້ໃດໜຶ່ງຫາກເຫັນວ່າຕົນໄດ້ຮັບຄວາມເສັຍປະໂຫຍດ ໂດຍບໍ່ສອດຄ່ອງກັບເງື່ອນໄຂຕາມທີ່ໄດ້ກຳນົດໄວ້ໃນມາດຕາ 50 ວັກທີສອງ ຂອງກົດໝາຍສະບັບນີ້ ກໍມີສິດສະເໜີຕໍ່ສານ ພິຈາລະນາຕັດສິນລົບລ້າງມະຕິດັ່ງກ່າວ.

ຖ້າແຜນຟື້ນຟູວິສາຫະກິດ ຫາກບໍ່ຖືກຮັບຮອງໃນກອງປະຊຸມເຈົ້າໜີ້ ແຕ່ມີຄຳເຫັນໃຫ້ນຳໄປປັບປຸງ, ດັດແກ້ ກໍໃຫ້ວິສາຫະກິດລູກໜີ້ ຫຼື ຜູ້ທີ່ສະເໜີແຜນຟື້ນຟູວິສາຫະກິດດັ່ງກ່າວ ນຳໄປຄົ້ນຄວ້າປັບປຸງ, ດັດແກ້ຕາມກຳນົດເວລາ ແລ້ວສະເໜີເຂົ້າພິຈາລະນາໃນກອງປະຊຸມເຈົ້າໜີ້ຄັ້ງຕໍ່ໄປ. ຖ້າແຜນຟື້ນຟູວິສາຫະກິດ ຖືກປະຕິເສດ ຫຼື ບໍ່ຮັບຮອງໃນກອງປະຊຸມເຈົ້າໜີ້ ກໍໃຫ້ວິສາຫະກິດລູກໜີ້ ເຂົ້າສູ່ຂະບວນການລົ້ມລະລາຍ.

### ມາດຕາ 50 (ໃໝ່) ການຮັບຮອງແຜນຟື້ນຟູວິສາຫະກິດໂດຍສານ

ເມື່ອແຜນຟື້ນຟູວິສາຫະກິດ ຖືກຮັບຮອງໃນກອງປະຊຸມເຈົ້າໜີ້ແລ້ວ ຜູ້ຄວບຄຸມຊັບສິນ ຕ້ອງສະເໜີສານ ພາຍໃນເວລາ ສາມວັນລັດຖະການ ນັບແຕ່ວັນປິດກອງປະຊຸມເຈົ້າໜີ້ ເພື່ອພິຈາລະນາຮັບຮອງແຜນດັ່ງກ່າວ ແລະ ອອກຄຳສັ່ງຈັດຕັ້ງປະຕິບັດແຜນຟື້ນຟູວິສາຫະກິດ.

ສານ ຈະຮັບຮອງແຜນຟື້ນຟູວິສາຫະກິດ ຖ້າຫາກມີເງື່ອນໄຂ ດັ່ງນີ້:

1. ເຈົ້າໜີ້ທຸກຄົນ ໂດຍບໍ່ມີການຈຳແນກ ຈະໄດ້ຜົນປະໂຫຍດຈາກການຟື້ນຟູວິສາຫະກິດ ຢ່າງຍຸຕິທຳ ແລະ ໄດ້ຮັບຫຼາຍກວ່າທີ່ຈະໄດ້ຮັບໃນການດຳເນີນຄະດີລົ້ມລະລາຍ;

2. ເຈົ້າໜີ້ທຸກປະເພດ ໄດ້ເຫັນດີຮັບຮອງແຜນຟື້ນຟູວິສາຫະກິດ;

3. ແຜນຟື້ນຟູວິສາຫະກິດ ມີຄວາມອາດສາມາດປະຕິບັດສຳເລັດ ແລະ ວິສາຫະກິດລູກໜີ້ ກໍມີຄວາມຕັ້ງໃຈ ທີ່ຈະປະຕິບັດແຜນດັ່ງກ່າວ.

### ມາດຕາ 51 (ໃໝ່) ການແຈ້ງຄຳສັ່ງຈັດຕັ້ງປະຕິບັດແຜນຟື້ນຟູວິສາຫະກິດ

ພາຍຫຼັງອອກຄຳສັ່ງຈັດຕັ້ງປະຕິບັດແຜນຟື້ນຟູວິສາຫະກິດແລ້ວ, ສານ ຕ້ອງແຈ້ງຄຳສັ່ງດັ່ງກ່າວໃຫ້ວິສາຫະກິດລູກໜີ້, ເຈົ້າໜີ້, ຜູ້ຄວບຄຸມຊັບສິນ ແລະ ບຸກຄົນອື່ນທີ່ກ່ຽວຂ້ອງ ພາຍໃນເວລາ ສາມວັນລັດຖະການ ນັບແຕ່ວັນອອກຄຳສັ່ງເປັນຕົ້ນໄປ ເພື່ອຈັດຕັ້ງປະຕິບັດແຜນຟື້ນຟູວິສາຫະກິດ.

### ມາດຕາ 52 (ປັບປຸງ) ການຈັດຕັ້ງປະຕິບັດແຜນຟື້ນຟູວິສາຫະກິດ

ວິສາຫະກິດລູກໜີ້ ມີຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດແຜນຟື້ນຟູວິສາຫະກິດ ຕາມຄຳສັ່ງຂອງສານ ແລະ ແຜນຟື້ນຟູວິສາຫະກິດ ທີ່ຮັບຮອງໂດຍສານ.

ໃນການຈັດຕັ້ງປະຕິບັດແຜນຟື້ນຟູວິສາຫະກິດ ຖ້າວິສາຫະກິດລູກໜີ້ ຫາກຍັງໄດ້ຮັບຄວາມເຊື່ອໝັ້ນຈາກເຈົ້າໜີ້ໃຫ້ບໍລິຫານທຸລະກິດແລ້ວ, ຊັບສິນຕ່າງໆ ທີ່ຢູ່ໃນການຄອບຄອງຂອງຜູ້ຄວບຄຸມຊັບສິນ ຕ້ອງໄດ້ມອບຄືນໃຫ້ແກ່ວິສາຫະກິດລູກໜີ້ ພ້ອມທັງສິດຕ່າງໆ ໃນການຄຸ້ມຄອງ ແລະ ບໍລິຫານທຸລະກິດ.

**ມາດຕາ 53 (ປັບປຸງ) ໄລຍະເວລາຈັດຕັ້ງປະຕິບັດແຜນຟື້ນຟູວິສາຫະກິດ**

ໄລຍະເວລາຈັດຕັ້ງປະຕິບັດແຜນຟື້ນຟູວິສາຫະກິດ ໃຫ້ດຳເນີນຕາມກຳນົດເວລາ ທີ່ໄດ້ບົ່ງໄວ້ໃນແຜນຟື້ນຟູວິສາຫະກິດ ທີ່ຖືກຮັບຮອງໂດຍສານ ແຕ່ບໍ່ໃຫ້ເກີນ ສາມປີ ໂດຍໃຫ້ເລີ່ມແຕ່ວັນທີ່ສານອອກຄຳສັ່ງຈັດຕັ້ງປະຕິບັດແຜນຟື້ນຟູວິສາຫະກິດເປັນຕົ້ນໄປ.

**ມາດຕາ 54 (ໃໝ່) ການດັດແກ້ແຜນຟື້ນຟູວິສາຫະກິດ**

ແຜນຟື້ນຟູວິສາຫະກິດ ສາມາດດັດແກ້ໄດ້ໃນຕະຫຼອດໄລຍະເວລາການຈັດຕັ້ງປະຕິບັດແຜນດັ່ງກ່າວ. ວິສາຫະກິດລູກໜີ້ ທີ່ມີຈຸດປະສົງດັດແກ້ແຜນຟື້ນຟູວິສາຫະກິດ ຕ້ອງສະເໜີເນື້ອໃນທີ່ຈະດັດແກ້ຕໍ່ຜູ້ຄວບຄຸມຊັບສິນ ແລະ/ຫຼື ຄະນະກຳມະການເຈົ້າໜີ້ ເພື່ອພິຈາລະນາສະເໜີຕໍ່ກອງປະຊຸມເຈົ້າໜີ້.

ການພິຈາລະນາ, ການຮັບຮອງ ແລະ ການແຈ້ງຄຳສັ່ງດັດແກ້ແຜນຟື້ນຟູວິສາຫະກິດ ໃຫ້ປະຕິບັດຕາມມາດຕາ 49, 50 ແລະ 51 ຂອງກົດໝາຍສະບັບນີ້.

**ມາດຕາ 55 (ໃໝ່) ການຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດແຜນຟື້ນຟູວິສາຫະກິດ**

ຜູ້ຄວບຄຸມຊັບສິນ ແລະ ຄະນະກຳມະການເຈົ້າໜີ້ ຕ້ອງຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດແຜນຟື້ນຟູວິສາຫະກິດຂອງວິສາຫະກິດລູກໜີ້ ຢ່າງເປັນປົກກະຕິ.

ໃນໄລຍະເວລາຈັດຕັ້ງປະຕິບັດແຜນຟື້ນຟູວິສາຫະກິດນັ້ນ ວິສາຫະກິດລູກໜີ້ ຕ້ອງລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນຟື້ນຟູວິສາຫະກິດ, ສະຖານະທາງດ້ານການເງິນໃຫ້ຜູ້ຄວບຄຸມຊັບສິນ ແລະ ຄະນະກຳມະການເຈົ້າໜີ້ ປະຈຳເດືອນ, ສາມເດືອນ, ຫົກເດືອນ ແລະ ປີ ຢ່າງເປັນປົກກະຕິ.

ຜູ້ຄວບຄຸມຊັບສິນ ແລະ ຄະນະກຳມະການເຈົ້າໜີ້ ຕ້ອງລາຍງານການຈັດຕັ້ງປະຕິບັດແຜນຟື້ນຟູວິສາຫະກິດໃຫ້ສານ ແລະ ກອງປະຊຸມເຈົ້າໜີ້ ໃນທຸກຫົກເດືອນ.

**ມາດຕາ 56 (ໃໝ່) ການສິ້ນສຸດການຈັດຕັ້ງປະຕິບັດແຜນຟື້ນຟູວິສາຫະກິດ**

ການຈັດຕັ້ງປະຕິບັດແຜນຟື້ນຟູວິສາຫະກິດ ຈະສິ້ນສຸດລົງ ໃນກໍລະນີ ດັ່ງນີ້:

1. ວິສາຫະກິດລູກໜີ້ ສາມາດປະຕິບັດໄດ້ຕາມແຜນຟື້ນຟູວິສາຫະກິດ, ມີສະຖານະທາງດ້ານການເງິນພຽງພໍ ທີ່ຈະສືບຕໍ່ດຳເນີນທຸລະກິດ, ສາມາດຊຳລະໜີ້ສິນທີ່ມີຢູ່ໄດ້ ແລະ ບໍ່ມີເຈົ້າໜີ້ໃດຄັດຄ້ານ ພາຍຫຼັງສິ້ນສຸດໄລຍະເວລາຈັດຕັ້ງປະຕິບັດແຜນຟື້ນຟູວິສາຫະກິດ;

2. ວິສາຫະກິດລູກໜີ້ ເຄື່ອນໄຫວທຸລະກິດ ບໍ່ມີປະສິດທິຜົນ ແລະ ບໍ່ສາມາດຊຳລະໜີ້ສິນທີ່ມີຢູ່ໄດ້ ພາຍຫຼັງສິ້ນສຸດໄລຍະເວລາຈັດຕັ້ງປະຕິບັດແຜນຟື້ນຟູວິສາຫະກິດ;

3. ວິສາຫະກິດລູກໜີ້ ບໍ່ສາມາດປະຕິບັດຕາມແຜນຟື້ນຟູວິສາຫະກິດ ຫຼື ບໍ່ປະຕິບັດຕາມຄຳສັ່ງຂອງສານ ໃນໄລຍະເວລາຟື້ນຟູ;

4. ກໍລະນີອື່ນ ທີ່ມີເຫດຜົນ.

ມາດຕາ 57 (ປັບປຸງ) ຜົນຂອງການສິ້ນສຸດການຟື້ນຟູ

ໃນກໍລະນີການຈັດຕັ້ງປະຕິບັດແຜນຟື້ນຟູວິສາຫະກິດສິ້ນສຸດລົງ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 56 ຂໍ້ 1 ຂອງກົດໝາຍສະບັບນີ້ ສານ ກໍຈະຕັດສິນໃຫ້ວິສາຫະກິດລູກໜີ້ ສືບຕໍ່ດໍາເນີນທຸລະກິດຕໍ່ໄປ. ການນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ ຂອງຜູ້ຄວບຄຸມຊັບສິນ ກໍຈະສິ້ນສຸດລົງເຊັ່ນກັນ.

ໃນກໍລະນີການຈັດຕັ້ງປະຕິບັດແຜນຟື້ນຟູວິສາຫະກິດສິ້ນສຸດລົງ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 56 ຂໍ້ 2 ແລະ ຂໍ້ 3 ຂອງກົດໝາຍສະບັບນີ້ ສານ ກໍຈະຕັດສິນໃຫ້ວິສາຫະກິດລູກໜີ້ ລົ້ມລະລາຍ ຫຼື ໃຫ້ດັດແກ້ ແລະ ສືບຕໍ່ປະຕິບັດແຜນຟື້ນຟູວິສາຫະກິດ ຕາມການສະເໜີຂອງເຈົ້າໜີ້, ຄະນະກໍາມະການເຈົ້າໜີ້ ຫຼື ຜູ້ຄວບຄຸມຊັບສິນ.

ໃນໄລຍະດໍາເນີນການຟື້ນຟູວິສາຫະກິດ ສານ ສາມາດຕັດສິນໃຫ້ວິສາຫະກິດລູກໜີ້ລົ້ມລະລາຍເວລາໃດກໍໄດ້ ເມື່ອເຫັນວ່າວິສາຫະກິດລູກໜີ້ ບໍ່ສາມາດຟື້ນຟູວິສາຫະກິດໄດ້ ຕາມການສະເໜີຂອງເຈົ້າໜີ້, ຄະນະກໍາມະການເຈົ້າໜີ້ ຫຼື ຜູ້ຄວບຄຸມຊັບສິນ.

## ພາກທີ VI
## ການຟື້ນຟູວິສາຫະກິດຂະໜາດນ້ອຍ ແລະ ຈຸລະວິສາຫະກິດ

ມາດຕາ 58 (ໃໝ່) ການຟື້ນຟູວິສາຫະກິດຂະໜາດນ້ອຍ ແລະ ຈຸລະວິສາຫະກິດ

ການຟື້ນຟູວິສາຫະກິດຂະໜາດນ້ອຍ ແລະ ຈຸລະວິສາຫະກິດ ແມ່ນ ການຟື້ນຟູຮູບແບບໜຶ່ງ ດ້ວຍການຕົກລົງແກ້ໄຂໜີ້ສິນ ທີ່ມີຂະບວນການທີ່ງ່າຍດາຍ, ວ່ອງໄວ ແລະ ມີຄ່າໃຊ້ຈ່າຍໜ້ອຍ ໂດຍໃຫ້ວິສາຫະກິດຂະໜາດນ້ອຍ ຫຼື ຈຸລະວິສາຫະກິດ ທີ່ຢູ່ໃນສະພາວະລົ້ມລະລາຍ ຫຼື ໃກ້ຈະຢູ່ໃນສະພາວະລົ້ມລະລາຍ ສາມາດເຈລະຈາກັບເຈົ້າໜີ້ ໂດຍມີການຮັບຮູ້ ແລະ ຮັບຮອງໂດຍສານ.

ມາດຕາ 59 (ໃໝ່) ການຮ້ອງຂໍຟື້ນຟູວິສາຫະກິດຂະໜາດນ້ອຍ ແລະ ຈຸລະວິສາຫະກິດ

ວິສາຫະກິດຂະໜາດນ້ອຍ ຫຼື ຈຸລະວິສາຫະກິດ ທີ່ຢູ່ໃນສະພາວະລົ້ມລະລາຍ ຫຼື ໃກ້ຈະຢູ່ໃນສະພາວະລົ້ມລະລາຍ ສາມາດຍື່ນຄໍາຮ້ອງຂໍຕໍ່ສານທີ່ມີສິດອໍານາດ ເພື່ອພິຈາລະນາການຟື້ນຟູວິສາຫະກິດຄືນ.

ວິສາຫະກິດຂະໜາດນ້ອຍ ຫຼື ຈຸລະວິສາຫະກິດ ທີ່ຖືກຮ້ອງຟ້ອງໃຫ້ລົ້ມລະລາຍ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 10 ຂອງກົດໝາຍສະບັບນີ້ ກໍສາມາດຮ້ອງຂໍໃຫ້ສານພິຈາລະນາການຟື້ນຟູວິສາຫະກິດຄືນໄດ້.

ມາດຕາ 60 (ໃໝ່) ສໍານວນຄໍາຮ້ອງຂໍ

ສໍານວນຄໍາຮ້ອງຂໍຟື້ນຟູວິສາຫະກິດຂະໜາດນ້ອຍ ແລະ ຈຸລະວິສາຫະກິດ ປະກອບດ້ວຍ:

1. ຄໍາຮ້ອງຂໍ ຕາມແບບພິມທີ່ສານກໍານົດ;
2. ເອກະສານຢັ້ງຢືນການເປັນວິສາຫະກິດຂະໜາດນ້ອຍ ຫຼື ຈຸລະວິສາຫະກິດ;
3. ໜັງສືຊີ້ແຈງຊັບສິນ ແລະ ໜີ້ສິນ ທີ່ມີເນື້ອໃນ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 9 ຂໍ້ 3 ຂອງກົດໝາຍສະບັບນີ້;
4. ເອກະສານອື່ນທີ່ກ່ຽວຂ້ອງ.

**ມາດຕາ 61 (ໃໝ່) ການກວດກາສຳນວນຄຳຮ້ອງຂໍ**

ເມື່ອໄດ້ຮັບສຳນວນຄຳຮ້ອງຂໍແລ້ວ ຈ່າສານ ຕ້ອງກວດກາເບິ່ງສຳນວນຄຳຮ້ອງຂໍດັ່ງກ່າວ ວ່າມີເນື້ອໃນ ແລະ ເອກະສານ ຖືກຕ້ອງ ແລະ ຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 60 ຂອງກົດໝາຍສະບັບນີ້ ຫຼື ບໍ່, ຖ້າເຫັນວ່າສຳນວນຮ້ອງຂໍດັ່ງກ່າວ ຫາກຄົບຖ້ວນ ແລະ ຖືກຕ້ອງແລ້ວ ຈ່າສານ ຈຶ່ງຮັບຄຳຮ້ອງຂໍ ແລ້ວປະກອບສຳນວນຄະດີ ພ້ອມທັງຂຶ້ນຟ້ອງຄະດີ ພາຍໃນເວລາ ສາມວັນລັດຖະການ. ໃນກໍລະນີທີ່ສຳນວນຄຳຮ້ອງຂໍ ຫາກບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນ ຈ່າສານ ຕ້ອງສົ່ງສຳນວນດັ່ງກ່າວຄືນໃຫ້ຜູ້ຮ້ອງຂໍ ພ້ອມທັງແນະນຳໃຫ້ຜູ້ກ່ຽວແກ້ໄຂຂໍ້ບົກພ່ອງ.

**ມາດຕາ 62 (ໃໝ່) ການມອບສຳນວນຄະດີໃຫ້ຜູ້ພິພາກສາ**

ພາຍຫຼັງໄດ້ຮັບສຳນວນຄະດີແລ້ວ ປະທານສານທີ່ມີສິດອຳນາດ ຕ້ອງມອບຄະດີດັ່ງກ່າວ ໃຫ້ຫົວໜ້າຄະນະສານການຄ້າ ເພື່ອມອບໝາຍໃຫ້ຜູ້ພິພາກສາໃດໜຶ່ງຮັບຜິດຊອບຄົ້ນຄວ້າ ພາຍໃນເວລາ ສາມວັນລັດຖະການ ນັບແຕ່ວັນໄດ້ຮັບສຳນວນຄະດີເປັນຕົ້ນໄປ.

ໃນກໍລະນີທີ່ມີການຮ້ອງຟ້ອງລົ້ມລະລາຍ ຜູ້ພິພາກສາທີ່ຖືກມອບໝາຍໃຫ້ຄົ້ນຄວ້າຄະດີລົ້ມລະລາຍນັ້ນ ຈະເປັນຜູ້ຮັບຜິດຊອບກ່ຽວກັບການຟື້ນຟູວິສາຫະກິດຂະໜາດນ້ອຍ ແລະ ຈຸລະວິສາຫະກິດ.

**ມາດຕາ 63 (ໃໝ່) ການຄົ້ນຄວ້າສຳນວນຄະດີ ແລະ ການເປີດການພິຈາລະນາຄະດີຟື້ນຟູ**

ຜູ້ພິພາກສາທີ່ຖືກມອບໝາຍ ຕ້ອງຮັບຜິດຊອບຄົ້ນຄວ້າສຳນວນຄະດີ, ກວດກາເງື່ອນໄຂຂອງວິສາຫະກິດລູກໜີ້ ພາຍໃນເວລາ ຫ້າວັນລັດຖະການ ນັບແຕ່ວັນໄດ້ຮັບມອບໝາຍ ຖ້າມີເງື່ອນໄຂຖືກຕ້ອງແລ້ວ ສານຕ້ອງພິຈາລະນາອອກຄຳສັ່ງເປີດການພິຈາລະນາຄະດີຟື້ນຟູວິສາຫະກິດຂະໜາດນ້ອຍ ແລະ ຈຸລະວິສາຫະກິດ ພ້ອມທັງສະເໜີແຕ່ງຕັ້ງຜູ້ຄວບຄຸມຊັບສິນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 19 ຂອງກົດໝາຍສະບັບນີ້.

ຄຳສັ່ງເປີດການພິຈາລະນາຄະດີຟື້ນຟູວິສາຫະກິດຂະໜາດນ້ອຍ ແລະ ຈຸລະວິສາຫະກິດ ເປັນຄຳສັ່ງທີ່ໃຊ້ໄດ້ຢ່າງເດັດຂາດ.

**ມາດຕາ 64 (ໃໝ່) ການແຈ້ງ ແລະ ປະກາດຄຳສັ່ງເປີດການພິຈາລະນາຄະດີຟື້ນຟູ**

ພາຍຫຼັງມີຄຳສັ່ງເປີດການພິຈາລະນາຄະດີຟື້ນຟູວິສາຫະກິດຂະໜາດນ້ອຍ ແລະ ຈຸລະວິສາຫະກິດແລ້ວ, ພາຍໃນເວລາ ສາມວັນລັດຖະການ ສານ ຕ້ອງແຈ້ງຄຳສັ່ງດັ່ງກ່າວ ໃຫ້ເຈົ້າໜີ້ຕາມບັນຊີລາຍຊື່ໃນໜັງສືຊີ້ແຈງຊັບສິນ ແລະ ໜີ້ສິນ ແລະ ປະກາດໃຫ້ເຈົ້າໜີ້ອື່ນ ແລະ ສັງຄົມ ຜ່ານພາຫະນະສື່ມວນຊົນ ຢ່າງໜ້ອຍ ຫ້າວັນຕິດຕໍ່ກັນ ເພື່ອຊາບກ່ຽວກັບການເປີດການພິຈາລະນາຄະດີຟື້ນຟູດັ່ງກ່າວ.

ສຳລັບເຈົ້າໜີ້ ທີ່ຍັງບໍ່ທັນມີໃນບັນຊີລາຍຊື່ໃນໜັງສືຊີ້ແຈງຊັບສິນ ແລະ ໜີ້ສິນນັ້ນ ໃຫ້ແຈ້ງຕໍ່ຜູ້ຄວບຄຸມຊັບສິນ ຫຼື ສານ ພາຍໃນເວລາ ສາມສິບວັນ ນັບແຕ່ວັນທີ່ສານ ໄດ້ແຈ້ງ ຫຼື ປະກາດເປັນຕົ້ນໄປ.

**ມາດຕາ 65 (ໃໝ່) ການຢຸດການດຳເນີນການທາງດ້ານກົດໝາຍ ແລະ ການໂຈະການຊຳລະ**

ພາຍຫຼັງມີຄຳສັ່ງເປີດການພິຈາລະນາຄະດີຟື້ນຟູວິສາຫະກິດຂະໜາດນ້ອຍ ແລະ ຈຸລະວິສາຫະກິດແລ້ວ, ເຈົ້າໜີ້ ຕ້ອງຢຸດການດຳເນີນການທາງດ້ານກົດໝາຍ ຕໍ່ວິສາຫະກິດລູກໜີ້ ຫຼື ຊັບສິນຂອງວິສາຫະກິດລູກໜີ້. ເຈົ້າໜີ້ທີ່ມີການຄ້ຳປະກັນ ແລະ ເຈົ້າໜີ້ທີ່ບໍ່ມີການຄ້ຳປະກັນ ຕ້ອງບໍ່ຮ້ອງຟ້ອງ, ທວງໜີ້, ເຂົ້າຄອບຄອງ, ຍຶດ ຫຼື ກະທຳອື່ນ ໂດຍບໍ່ໄດ້ຮັບອະນຸຍາດຈາກສານ.

ການຊຳລະຕົ້ນທຶນ ໃຫ້ເຈົ້າໜີ້ ແລະ ການຊຳລະດອກເບ້ຍ ໃຫ້ເຈົ້າໜີ້ທີ່ບໍ່ມີການຄ້ຳປະກັນ ໂດຍວິສາຫະກິດລູກໜີ້ ຈະຖືກໂຈະນັບແຕ່ວັນມີຄຳສັ່ງເປີດການພິຈາລະນາຄະດີຟື້ນຟູເປັນຕົ້ນໄປ. ສ່ວນການຊຳລະດອກເບ້ຍ ໃຫ້ເຈົ້າໜີ້ທີ່ມີການຄ້ຳປະກັນ ສືບຕໍ່ຈົນກວ່າມູນຄ່າການຊຳລະຈະຄົບມູນຄ່າຂອງຊັບຄ້ຳປະກັນ.

**ມາດຕາ 66 (ໃໝ່) ເອກະສານທີ່ຕ້ອງສະເໜີກ່ຽວກັບການຟື້ນຟູວິສາຫະກິດຂະໜາດນ້ອຍ ແລະ ຈຸລະວິສາຫະກິດ**

ວິສາຫະກິດລູກໜີ້ ຕ້ອງກະກຽມ ແລະ ສ້າງເອກະສານ ເພື່ອສະເໜີຕໍ່ສານ ພາຍໃນເວລາ ສາມສິບວັນ ນັບແຕ່ວັນມີຄຳສັ່ງເປີດການພິຈາລະນາຄະດີຟື້ນຟູເປັນຕົ້ນໄປ.

ເອກະສານທີ່ຕ້ອງສະເໜີກ່ຽວກັບການຟື້ນຟູ ມີ ດັ່ງນີ້:

1. ຂໍ້ສະເໜີແກ້ໄຂໜີ້ສິນ;

2. ໜັງສືຊີ້ແຈງຊັບສິນ ແລະ ໜີ້ສິນ;

3. ເອກະສານຕົກລົງເຫັນດີ ກ່ຽວກັບຂໍ້ສະເໜີແກ້ໄຂໜີ້ສິນ ຈາກເຈົ້າໜີ້ທີ່ມີການຄ້ຳປະກັນ ຫຼື ຖ້າບໍ່ເຫັນດີ ກໍໃຫ້ມີເອກະສານຢັ້ງຢືນ ພ້ອມດ້ວຍເຫດຜົນ ແລະ ຂໍ້ສະເໜີ;

4. ບົດລາຍງານຂອງຜູ້ຄວບຄຸມຊັບສິນ;

5. ເອກະສານອື່ນ ຕາມການແນະນຳຂອງຜູ້ຄວບຄຸມຊັບສິນ.

ໃນກໍລະນີວິສາຫະກິດລູກໜີ້ ຫາກບໍ່ສາມາດຍື່ນເອກະສານຕໍ່ສານ ພາຍໃນເວລາດັ່ງກ່າວ ໂດຍມີເຫດຜົນພຽງພໍ ກໍສາມາດຮ້ອງຂໍຕໍ່ສານ ເພື່ອພິຈາລະນາຕໍ່ກຳນົດເວລາດັ່ງກ່າວອີກ ສາມສິບວັນ ແຕ່ສູງສຸດບໍ່ໃຫ້ເກີນ ຫົກສິບວັນ.

**ມາດຕາ 67 (ໃໝ່) ການພິຈາລະນາຂໍ້ສະເໜີການແກ້ໄຂໜີ້ສິນ**

ພາຍຫຼັງໄດ້ຮັບຂໍ້ສະເໜີແກ້ໄຂໜີ້ສິນ ແລະ ເອກະສານ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 66 ຂອງກົດໝາຍສະບັບນີ້ ຜູ້ພິພາກສາທີ່ຖືກມອບໝາຍ ຕ້ອງຄົ້ນຄວ້າ ແລະ ພິຈາລະນາຕົກລົງ ພາຍໃນເວລາ ຫ້າວັນລັດຖະການ ຖ້າວ່າ:

1. ບົດລາຍງານຂອງຜູ້ຄວບຄຸມຊັບສິນ ຫາກສະແດງໃຫ້ເຫັນວ່າ:

- ວິສາຫະກິດລູກໜີ້ ມີຄວາມໜ້າເຊື່ອຖື;
- ຂໍ້ສະເໜີຊຳລະໜີ້ສິນນັ້ນ ເຈົ້າໜີ້ແຕ່ລະຄົນ ຈະໄດ້ຮັບ ຢ່າງໜ້ອຍ ບໍ່ຫຼຸດການຊຳລະໜີ້ສິນທີ່ຈະໄດ້ຮັບ ໃນຂະບວນການລົ້ມລະລາຍ;
- ຂໍ້ສະເໜີແກ້ໄຂໜີ້ສິນ ມີເຫດມີຜົນ ແລະ ຍຸຕິທຳ;
- ຂໍ້ສະເໜີແກ້ໄຂໜີ້ສິນ ສາມາດປະຕິບັດໃຫ້ສຳເລັດໄດ້.

2. ເຈົ້າໜີ້ທີ່ມີການຄ້ຳປະກັນທຸກຄົນ ຕົກລົງເຫັນດີ ຫຼື ຂໍ້ສະເໜີແກ້ໄຂໜີ້ສິນ ໄດ້ໃຫ້ການປົກປ້ອງເຈົ້າໜີ້ທີ່ມີການຄ້ຳປະກັນທີ່ບໍ່ເຫັນດີ.

**ມາດຕາ 68 (ໃໝ່) ການແຈ້ງຂໍ້ສະເໜີແກ້ໄຂໜີ້ສິນໃຫ້ເຈົ້າໜີ້**

ພາຍຫຼັງຂໍ້ສະເໜີແກ້ໄຂໜີ້ສິນໄດ້ຮັບການເຫັນດີຈາກຜູ້ພິພາກສາແລ້ວ, ສານ ຕ້ອງແຈ້ງໃຫ້ເຈົ້າໜີ້ທຸກຄົນ ພ້ອມທັງສຳເນົາຂໍ້ສະເໜີແກ້ໄຂໜີ້ສິນ ແລະ ເອກະສານທີ່ກ່ຽວຂ້ອງໃຫ້ເຈົ້າໜີ້ດັ່ງກ່າວ.

**ມາດຕາ 69 (ໃໝ່) ການພິຈາລະນາຂໍ້ສະເໜີແກ້ໄຂໜີ້ສິນໂດຍກອງປະຊຸມເຈົ້າໜີ້**

ຜູ້ຄວບຄຸມຊັບສິນ ຕ້ອງຮຽກເປີດກອງປະຊຸມເຈົ້າໜີ້ ເພື່ອພິຈາລະນາຂໍ້ສະເໜີແກ້ໄຂໜີ້ສິນ ພາຍໃນເວລາ ສິບວັນ ນັບແຕ່ວັນຂໍ້ສະເໜີແກ້ໄຂໜີ້ສິນໄດ້ຮັບການເຫັນດີຈາກຜູ້ພິພາກສາເປັນຕົ້ນໄປ.

ໃນກອງປະຊຸມເຈົ້າໜີ້ ມີແຕ່ເຈົ້າໜີ້ທີ່ບໍ່ມີການຄ້ຳປະກັນເທົ່ານັ້ນ ມີສິດລົງຄະແນນສຽງ ສ່ວນເຈົ້າໜີ້ທີ່ມີການຄ້ຳປະກັນນັ້ນ ມີສິດລົງຄະແນນສຽງ ສະເພາະແຕ່ສ່ວນໜີ້ສິນຂອງຕົນທີ່ບໍ່ໄດ້ມີການຄ້ຳປະກັນເທົ່ານັ້ນ.

ຂໍ້ສະເໜີແກ້ໄຂໜີ້ສິນ ຈະໄດ້ຮັບການຮັບຮອງໂດຍກອງປະຊຸມເຈົ້າໜີ້ ກໍຕໍ່ເມື່ອໄດ້ຮັບຄະແນນສຽງສ່ວນຫຼາຍຂອງເຈົ້າໜີ້ທີ່ມີສິດລົງຄະແນນສຽງ ຫຼື ຕົວແທນ ທີ່ເຂົ້າຮ່ວມກອງປະຊຸມ ແລະ ມີມູນຄ່າໜີ້ສິນກວມເອົາສອງສ່ວນສາມຂອງຈຳນວນໜີ້ສິນທີ່ບໍ່ມີການຄ້ຳປະກັນທັງໝົດ.

ເຈົ້າໜີ້ທີ່ບໍ່ມີການຄ້ຳປະກັນທຸກຄົນ ຈະລົງຄະແນນສຽງເປັນກຸ່ມດຽວກັນ. ໃນກໍລະນີຜົນປະໂຫຍດຂອງເຈົ້າໜີ້ທີ່ບໍ່ມີການຄ້ຳປະກັນ ຫາກແຍກເປັນຫຼາຍປະເດັນທີ່ແຕກຕ່າງກັນ ຕາມການກຳນົດຂອງຜູ້ຄວບຄຸມຊັບສິນ, ການລົງຄະແນນສຽງຂອງເຈົ້າໜີ້ທີ່ບໍ່ມີການຄ້ຳປະກັນ ກໍໃຫ້ແຍກເປັນກຸ່ມຕາມແຕ່ລະປະເດັນ ແລະ ລົງມະຕິຮັບຮອງແຕ່ລະປະເດັນ.

ໃນກໍລະນີກອງປະຊຸມເຈົ້າໜີ້ ຫາກມີມະຕິຮັບຮອງ ຫຼື ບໍ່ຮັບຮອງຂໍ້ສະເໜີແກ້ໄຂໜີ້ສິນ, ປະທານກອງປະຊຸມ ຕ້ອງສະເໜີມະຕິ ພ້ອມດ້ວຍຂໍ້ສະເໜີແກ້ໄຂໜີ້ສິນທີ່ຖືກຮັບຮອງ ຫຼື ບໍ່ຖືກຮັບຮອງໃຫ້ສານ ພາຍໃນເວລາ ສາມວັນລັດຖະການ ນັບແຕ່ວັນປິດກອງປະຊຸມເຈົ້າໜີ້ເປັນຕົ້ນໄປ.

**ມາດຕາ 70 (ໃໝ່) ການຮັບຮອງຜົນຂອງກອງປະຊຸມເຈົ້າໜີ້ໂດຍສານ**

ໃນກໍລະນີກອງປະຊຸມເຈົ້າໜີ້ ຫາກມີມະຕິຮັບຮອງຂໍ້ສະເໜີແກ້ໄຂໜີ້ສິນ ແລະ ບໍ່ມີການຮ້ອງຂໍຄັດຄ້ານແລ້ວ, ສານ ຕ້ອງພິຈາລະນາຮັບຮອງຂໍ້ສະເໜີແກ້ໄຂໜີ້ສິນດັ່ງກ່າວ ພ້ອມທັງອອກຄຳສັ່ງຈັດຕັ້ງປະຕິບັດຂໍ້ສະເໜີແກ້ໄຂໜີ້ສິນນັ້ນ ຊຶ່ງມີຜົນບັງຄັບຕໍ່ເຈົ້າໜີ້ທຸກຄົນ.

ເຈົ້າໜີ້ທີ່ບໍ່ມີການຄ້ຳປະກັນ ທີ່ໄດ້ລົງຄະແນນສຽງບໍ່ຮັບຮອງຂໍ້ສະເໜີແກ້ໄຂໜີ້ສິນ ສາມາດຍື່ນຄຳຮ້ອງຂໍຄັດຄ້ານມະຕິຮັບຮອງຂໍ້ສະເໜີແກ້ໄຂໜີ້ສິນ ຕໍ່ສານ ພາຍໃນເວລາ ສາມວັນລັດຖະການ ນັບແຕ່ວັນປິດກອງປະຊຸມ ຊຶ່ງສານຕ້ອງພິຈາລະນາແກ້ໄຂໂດຍໄວ. ເຈົ້າໜີ້ທີ່ບໍ່ເຂົ້າຮ່ວມກອງປະຊຸມ ບໍ່ມີສິດຄັດຄ້ານມະຕິຮັບຮອງຂໍ້ສະເໜີແກ້ໄຂໜີ້ສິນ.

ໃນກໍລະນີຂໍ້ສະເໜີແກ້ໄຂໜີ້ສິນແລ້ວ, ຫາກບໍ່ໄດ້ຮັບຮອງໃນກອງປະຊຸມເຈົ້າໜີ້ ກໍໃຫ້ສານພິຈາລະນານຳເອົາການຕົກລົງແກ້ໄຂໜີ້ສິນ ໄປສູ່ການດຳເນີນຄະດີລົ້ມລະລາຍ.

**ມາດຕາ 71 (ໃໝ່) ການຈັດຕັ້ງປະຕິບັດຂໍ້ສະເໜີແກ້ໄຂໜີ້ສິນ**

ພາຍຫຼັງມີຄຳສັ່ງຈັດຕັ້ງປະຕິບັດຂໍ້ສະເໜີແກ້ໄຂໜີ້ສິນ ວິສາຫະກິດລູກໜີ້ ຕ້ອງຈັດຕັ້ງປະຕິບັດຂໍ້ສະເໜີແກ້ໄຂໜີ້ສິນທັນທີ.

ຜູ້ຄວບຄຸມຊັບສິນ ມີຄວາມຮັບຜິດຊອບໃນການເຂົ້າຄວບຄຸມຊັບສິນທີ່ເປັນເປົ້າໝາຍ, ຄຸ້ມຄອງ, ຊື້ຂາຍ ແລະ ແບ່ງປັນຊັບສິນຂອງວິສາຫະກິດລູກໜີ້ ຕາມຂໍ້ສະເໜີແກ້ໄຂໜີ້ສິນທີ່ຖືກຮັບຮອງ.

ຜູ້ຄວບຄຸມຊັບສິນ ຕ້ອງຊຸກຍູ້, ຕິດຕາມວິສາຫະກິດລູກໜີ້ໃນການຈັດຕັ້ງປະຕິບັດຂໍ້ສະເໜີແກ້ໄຂໜີ້ສິນ ພ້ອມທັງລາຍງານການຈັດຕັ້ງປະຕິບັດໃຫ້ສານ ຢ່າງເປັນປົກກະຕິ.

**ມາດຕາ 72 (ໃໝ່) ໄລຍະເວລາຈັດຕັ້ງປະຕິບັດຂໍ້ສະເໜີແກ້ໄຂໜີ້ສິນ**

ໄລຍະເວລາຈັດຕັ້ງປະຕິບັດຂໍ້ສະເໜີແກ້ໄຂໜີ້ສິນ ໃຫ້ປະຕິບັດຕາມກຳນົດເວລາທີ່ໄດ້ກຳນົດໄວ້ໃນຂໍ້ສະເໜີແກ້ໄຂໜີ້ສິນ ທີ່ຖືກຮັບຮອງໂດຍສານ ແຕ່ບໍ່ໃຫ້ເກີນ ສອງປີ ໂດຍໃຫ້ເລີ່ມແຕ່ວັນທີ່ສານອອກຄຳສັ່ງຈັດຕັ້ງປະຕິບັດຂໍ້ສະເໜີແກ້ໄຂໜີ້ສິນເປັນຕົ້ນໄປ.

**ມາດຕາ 73 (ໃໝ່) ການດັດແກ້ຂໍ້ສະເໜີແກ້ໄຂໜີ້ສິນ**

ພາຍຫຼັງຈັດຕັ້ງປະຕິບັດຂໍ້ສະເໜີແກ້ໄຂໜີ້ສິນແລ້ວ, ຖ້າວິສາຫະກິດລູກໜີ້ ຫຼື ຜູ້ຄວບຄຸມຊັບສິນ ຫາກເຫັນວ່າມີຄວາມຈຳເປັນຕ້ອງໄດ້ດັດແກ້ເນື້ອໃນຂອງຂໍ້ສະເໜີດັ່ງກ່າວ ກໍໃຫ້ສະເໜີຕໍ່ສານເພື່ອພິຈາລະນາ.

ສານ ຈະພິຈາລະນາໃຫ້ດັດແກ້ຂໍ້ສະເໜີແກ້ໄຂໜີ້ສິນ ກໍຕໍ່ເມື່ອ:

1. ມີບົດລາຍງານທີ່ກຳນົດຄວາມຈຳເປັນໃນການດັດແກ້ເນື້ອໃນຂອງຂໍ້ສະເໜີ;

2. ໄດ້ຮັບການເຫັນດີໃຫ້ດັດແກ້ເນື້ອໃນຂອງຂໍ້ສະເໜີ ດ້ວຍຄະແນນສຽງສ່ວນຫຼາຍໃນກອງປະຊຸມເຈົ້າໜີ້.

**ມາດຕາ 74 (ໃໝ່) ການຍົກເລີກຂໍ້ສະເໜີແກ້ໄຂໜີ້ສິນ**

ຂໍ້ສະເໜີແກ້ໄຂໜີ້ສິນ ສາມາດຖືກຍົກເລີກໃນເວລາໃດກໍໄດ້ ບົນພື້ນຖານການສະເໜີຂອງຜູ້ຄວບຄຸມຊັບສິນ, ເຈົ້າໜີ້ ຫຼື ວິສາຫະກິດລູກໜີ້ ຕາມກໍລະນີ ດັ່ງນີ້:

1. ຂໍ້ມູນທີ່ກຳນົດໃນໜັງສືຊີ້ແຈງຊັບສິນ ແລະ ໜີ້ສິນ ບໍ່ຖືກຕ້ອງຕາມຄວາມເປັນຈິງ ແລະ ຂໍ້ສະເໜີແກ້ໄຂໜີ້ສິນ ອາດບໍ່ຖືກຮັບຮອງ ຖ້າເຈົ້າໜີ້ ຮູ້ຂໍ້ມູນດັ່ງກ່າວ;

2. ວິສາຫະກິດລູກໜີ້ ບໍ່ປະຕິບັດຕາມເງື່ອນໄຂຂອງຂໍ້ສະເໜີແກ້ໄຂໜີ້ສິນ;

3. ວິສາຫະກິດລູກໜີ້ ບໍ່ສາມາດປະຕິບັດໄດ້ຕາມເງື່ອນໄຂຂອງຂໍ້ສະເໜີແກ້ໄຂໜີ້ສິນ;

4. ກອງປະຊຸມເຈົ້າໜີ້ ບໍ່ເຫັນດີໃຫ້ດັດແກ້ເນື້ອໃນຂອງຂໍ້ສະເໜີແກ້ໄຂໜີ້ສິນ.

ການຍົກເລີກຂໍ້ສະເໜີແກ້ໄຂໜີ້ສິນໃນກໍລະນີໃດກໍຕາມ, ສານ ຕ້ອງອອກຄຳສັ່ງຍົກເລີກຂໍ້ສະເໜີແກ້ໄຂໜີ້ສິນແລ້ວນຳເອົາຄະດີດັ່ງກ່າວ ເຂົ້າສູ່ການດຳເນີນຄະດີລົ້ມລະລາຍ. ຜູ້ຄວບຄຸມຊັບສິນໃນການຟື້ນຟູວິສາຫະກິດຂະໜາດນ້ອຍ ແລະ ຈຸນລະວິສາຫະກິດ ຈະກາຍເປັນຜູ້ຄວບຄຸມຊັບສິນໃນການດຳເນີນຄະດີລົ້ມລະລາຍ. ຊັບສິນຂອງວິສາຫະກິດລູກໜີ້ ທີ່ຢູ່ໃນການຄອບຄອງ ແລະ ຄວບຄຸມຂອງວິສາຫະກິດລູກໜີ້ ຕ້ອງມອບໃຫ້ຜູ້ຄວບຄຸມຊັບສິນ.

ຄຳສັ່ງຍົກເລີກຂໍ້ສະເໜີແກ້ໄຂໜີ້ສິນ ຈະບໍ່ມີຜົນກະທົບຕໍ່ສັນຍາ, ການຊື້ຂາດຊັບສິນ ຫຼື ການຊຳລະສະສາງ ທີ່ປະຕິບັດສຳເລັດ ແລະ ເຮັດຂຶ້ນຢ່າງຖືກຕ້ອງໃນໄລຍະດຳເນີນການຟື້ນຟູ.

## ພາກທີ VII
## ການລົ້ມລະລາຍ

**ມາດຕາ 75 (ໃໝ່) ສາເຫດທີ່ສານຕັດສິນໃຫ້ລົ້ມລະລາຍ**

ສາເຫດທີ່ສານຕັດສິນໃຫ້ລົ້ມລະລາຍ ມີ ດັ່ງນີ້:

1. ວິສາຫະກິດລູກໜີ້ ສະໝັກໃຈຮ້ອງຂໍລົ້ມລະລາຍ;

2. ວິສາຫະກິດລູກໜີ້ ບໍ່ໄດ້ສະເໜີຂໍຟື້ນຟູວິສາຫະກິດ ເມື່ອມີການຮ້ອງຟ້ອງໃຫ້ລົ້ມລະລາຍ ;

3. ວິສາຫະກິດລູກໜີ້ ບໍ່ສາມາດຕົກລົງຂໍ້ສະເໜີແກ້ໄຂໜີ້ສິນກັບເຈົ້າໜີ້ໄດ້;

4. ກອງປະຊຸມເຈົ້າໜີ້ ປະຕິເສດ ຫຼື ບໍ່ຮັບຮອງຂໍ້ສະເໜີແກ້ໄຂໜີ້ສິນ ຫຼື ແຜນຟື້ນຟູວິສາຫະກິດ;

5. ວິສາຫະກິດລູກໜີ້ ບໍ່ສາມາດປະຕິບັດໄດ້ຕາມຂໍ້ສະເໜີແກ້ໄຂໜີ້ສິນ ຫຼື ແຜນຟື້ນຟູວິສາຫະກິດ;

6. ວິສາຫະກິດລູກໜີ້ ບໍ່ປະຕິບັດຕາມ ຂໍ້ສະເໜີແກ້ໄຂໜີ້ສິນ, ແຜນຟື້ນຟູວິສາຫະກິດ ຫຼື ຄຳສັ່ງຂອງສານ ໃນໄລຍະເວລາຟື້ນຟູວິສາຫະກິດ;

7. ເຈົ້າຂອງ ວິສາຫະກິດສ່ວນບຸກຄົນ ຫຼື ບໍລິສັດຈຳກັດຜູ້ດຽວ ເສຍຊີວິດ ໂດຍບໍ່ມີຜູ້ສືບທອດ ໃນກໍລະນີມີການຮ້ອງຟ້ອງລົ້ມລະລາຍ.

**ມາດຕາ 76 (ໃໝ່) ຄວາມຮັບຜິດຊອບຂອງວິສາຫະກິດລູກໜີ້**

ພາຍຫຼັງກອງປະຊຸມເຈົ້າໜີ້ ມີມະຕິໃຫ້ວິສາຫະກິດລູກໜີ້ລົ້ມລະລາຍແລ້ວ, ວິສາຫະກິດລູກໜີ້ ລວມທັງເຈົ້າຂອງວິສາຫະກິດສ່ວນບຸກຄົນ ແລະ ຂາຮຸ້ນປະເພດບໍ່ຈຳກັດໜີ້ສິນຂອງວິສາຫະກິດຮຸ້ນສ່ວນ ຕ້ອງມອບຊັບສິນທັງໝົດຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 24 ຂອງກົດໝາຍສະບັບນີ້ ໃຫ້ຜູ້ຄວບຄຸມຊັບສິນ, ຍົກເວັ້ນຊັບສິນທີ່ບໍ່ຖືກຄວບຄຸມ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 25 ຂອງກົດໝາຍສະບັບນີ້.

**ມາດຕາ 77 (ປັບປຸງ) ການຕັດສິນກ່ຽວກັບການລົ້ມລະລາຍ**

ຜູ້ພິພາກສາທີ່ຖືກມອບໝາຍ ຕ້ອງຄົ້ນຄວ້າຄະດີ, ກວດກາເອກະສານ ແລະ ຂໍ້ມູນຕ່າງໆ ແລ້ວ ສະເໜີຕໍ່ສານ ເພື່ອພິຈາລະນາຕັດສິນກ່ຽວກັບການລົ້ມລະລາຍຂອງວິສາຫະກິດລູກໜີ້ ຕາມກໍລະນີ ດັ່ງນີ້:

1. ພາຍໃນເວລາ ສີ່ສິບຫ້າວັນ ນັບແຕ່ວັນມີຄຳສັ່ງເປີດການພິຈາລະນາຄະດີລົ້ມລະລາຍເປັນຕົ້ນໄປ ສຳລັບກໍລະນີຕາມທີ່ໄດ້ກຳນົດໄວ້ໃນມາດຕາ 75 ຂໍ້ 1 ແລະ ຂໍ້ 2 ຂອງກົດໝາຍສະບັບນີ້;

2. ພາຍໃນເວລາ ຊາວວັນ ນັບແຕ່ວັນໄດ້ຮັບການລາຍງານຈາກຜູ້ຄວບຄຸມຊັບສິນ ຫຼື ມະຕິກອງປະຊຸມເຈົ້າໜີ້ ສຳລັບກໍລະນີຕາມທີ່ໄດ້ກຳນົດໄວ້ໃນມາດຕາ 75 ຂໍ້ 3 ຫາ ຂໍ້ 7 ຂອງກົດໝາຍສະບັບນີ້.

ວິສາຫະກິດສ່ວນບຸກຄົນ ແລະ ວິສາຫະກິດຮຸ້ນສ່ວນ ທີ່ຖືກສານຕັດສິນໃຫ້ລົ້ມລະລາຍ ເຈົ້າຂອງວິສາຫະກິດສ່ວນບຸກຄົນ ແລະ ຂາຮຸ້ນປະເພດບໍ່ຈຳກັດໜີ້ສິນຂອງວິສາຫະກິດຮຸ້ນສ່ວນ ກໍໃຫ້ຖືວ່າລົ້ມລະລາຍເຊັ່ນກັນ.

**ມາດຕາ 78 (ປັບປຸງ) ການອຸທອນຄຳຕັດສິນຂອງສານ**

ເຈົ້າໜີ້, ເຈົ້າຂອງ ຫຼື ຜູ້ຕາງໜ້າຂອງວິສາຫະກິດລູກໜີ້ ມີສິດຂໍອຸທອນຄຳຕັດສິນຂອງສານກ່ຽວກັບການລົ້ມລະລາຍຂອງວິສາຫະກິດ ພາຍໃນເວລາ ຊາວວັນ ນັບແຕ່ວັນອ່ານ ຫຼື ຮັບຊາບຄຳຕັດສິນເປັນຕົ້ນໄປ.

ໃນການພິຈາລະນາຄະດີຂັ້ນອຸທອນນັ້ນ ໃຫ້ພິຈາລະນາທາງດ້ານກົດໝາຍເທົ່ານັ້ນ ໂດຍບໍ່ໃຫ້ດຳເນີນຂະບວນການຟື້ນຟູ ຫຼື ລົ້ມລະລາຍຕື່ມອີກ. ຖ້າສານຂັ້ນອຸທອນ ຫາກເຫັນວ່າການດຳເນີນຄະດີຟື້ນຟູ ຫຼື ລົ້ມລະລາຍ ບໍ່ຖືກຕ້ອງຕາມກົດໝາຍ ກໍໃຫ້ສົ່ງສຳນວນຄະດີໃຫ້ສານປະຊາຊົນແຂວງ, ນະຄອນຫຼວງ ທີ່ຕັດສິນຄະດີນັ້ນພິຈາລະນາຄືນໃໝ່.

ສຳລັບການພິຈາລະນາຄະດີຂອງສານຂັ້ນອຸທອນ ໃຫ້ສຳເລັດພາຍໃນເວລາ ຫົກສິບວັນ ນັບແຕ່ວັນທີ່ຜູ້ພິພາກສາໄດ້ຮັບສຳນວນຄະດີເປັນຕົ້ນໄປ.

**ມາດຕາ 79 (ປັບປຸງ) ການປະກາດການລົ້ມລະລາຍ**

ພາຍໃນເວລາ ສິບວັນ ນັບແຕ່ວັນຄຳຕັດສິນໃຫ້ວິສາຫະກິດລົ້ມລະລາຍ ໃຊ້ໄດ້ຢ່າງເດັດຂາດແລ້ວ ສານ ຕ້ອງປະກາດຜ່ານພາຫະນະສື່ມວນຊົນ ຢ່າງໜ້ອຍ ສາມວັນ ຕິດຕໍ່ກັນ ພ້ອມກັນນັ້ນກໍຕ້ອງສົ່ງສຳເນົາຄຳຕັດສິນໃຫ້:

1. ຫ້ອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ;

2. ເຈົ້າໜີ້ ແລະ ຜູ້ຮ່ວມຝ່າຍອື່ນ;

3. ວິສາຫະກິດລູກໜີ້ ທີ່ຖືກຕັດສິນໃຫ້ລົ້ມລະລາຍ;

4. ຜູ້ຄວບຄຸມຊັບສິນ;

5. ຂະແໜງການອຸດສາຫະກຳ ແລະ ການຄ້າ ບ່ອນວິສາຫະກິດລູກໜີ້ຂຶ້ນທະບຽນ;

6. ຂະແໜງສ່ວຍສາອາກອນ;

7. ສະຫະພັນກຳມະບານຂັ້ນແຂວງ;

8. ອົງການອື່ນທີ່ກ່ຽວຂ້ອງ.

## ພາກທີ VIII
## ການຈັດຕັ້ງປະຕິບັດຄຳຕັດສິນໃຫ້ວິສາຫະກິດລົ້ມລະລາຍ

**ມາດຕາ 80 (ໃໝ່) ອົງການຈັດຕັ້ງປະຕິບັດຄຳຕັດສິນໃຫ້ວິສາຫະກິດລົ້ມລະລາຍ**

ອົງການທີ່ມີສິດອຳນາດໃນການຈັດຕັ້ງປະຕິບັດຄຳຕັດສິນໃຫ້ວິສາຫະກິດລົ້ມລະລາຍ ແມ່ນ ອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານ.

ພາຍຫຼັງໄດ້ຮັບຄຳຕັດສິນໃຫ້ວິສາຫະກິດລົ້ມລະລາຍແລ້ວ ອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຕ້ອງຄົ້ນຄວ້າ, ກະກຽມ ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານດັ່ງກ່າວ.

**ມາດຕາ 81 (ໃໝ່) ການສະໜອງຂໍ້ມູນກ່ຽວກັບການລົ້ມລະລາຍ**

ຜູ້ຄວບຄຸມຊັບສິນ ຮັບຜິດຊອບສະໜອງຂໍ້ມູນ ທີ່ກ່ຽວຂ້ອງກັບວິສາຫະກິດລູກໜີ້ ແລະ ຊັບສິນຂອງວິສາຫະກິດລູກໜີ້ ທີ່ຕິດພັນກັບການປະຕິບັດຄຳຕັດສິນ ໃຫ້ອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ເປັນຕົ້ນ ບັນຊີຊັບສິນ, ບັນຊີເຈົ້າໜີ້, ປະເພດເຈົ້າໜີ້ ແລະ ຈຳນວນໜີ້ຕ້ອງສົ່ງ, ບັນຊີລູກໜີ້ ແລະ ຈຳນວນໜີ້ຕ້ອງຮັບຂອງວິສາຫະກິດລູກໜີ້.

**ມາດຕາ 82 (ປັບປຸງ) ການລວບລວມຊັບສິນຂອງວິສາຫະກິດລົ້ມລະລາຍ**

ພາຍຫຼັງຄຳຕັດສິນໃຫ້ວິສາຫະກິດລົ້ມລະລາຍໃຊ້ໄດ້ຢ່າງເດັດຂາດແລ້ວ ຊັບສິນທັງໝົດຂອງວິສາຫະກິດລູກໜີ້ ຈະຖືກນຳມາຊຳລະໜີ້ສິນໃຫ້ແກ່ເຈົ້າໜີ້ ແລະ ບຸກຄົນອື່ນທີ່ກ່ຽວຂ້ອງ ຊຶ່ງອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຕ້ອງຮິບໂຮມຊັບສິນທັງໝົດຂອງວິສາຫະກິດລູກໜີ້ ຕາມບັນຊີຊັບສິນ ແລະ ໜີ້ສິນທີ່ຮັບຮອງໂດຍກອງປະຊຸມເຈົ້າໜີ້ ໂດຍປະສານສົມທົບກັບຜູ້ຄວບຄຸມຊັບສິນ.

**ມາດຕາ 83 (ປັບປຸງ) ພັນທະຂອງວິສາຫະກິດລົ້ມລະລາຍ**

ວິສາຫະກິດລູກໜີ້, ຂາຮຸ້ນ ຫຼື ຜູ້ຖືຮຸ້ນຂອງວິສາຫະກິດລູກໜີ້ ມີພັນທະສະໜອງຂໍ້ມູນ ແລະ ໃຫ້ການຮ່ວມມືກັບອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ໃນການຊຳລະສະສາງໜີ້ສິນ ຕາມຄຳຕັດສິນຂອງສານ.

ເຈົ້າຂອງວິສາຫະກິດສ່ວນບຸກຄົນ ຫຼື ຂາຮຸ້ນປະເພດບໍ່ຈຳກັດໜີ້ສິນຂອງວິສາຫະກິດຮຸ້ນສ່ວນ ທີ່ຖືກສານຕັດສິນໃຫ້ລົ້ມລະລາຍ ຈະອອກນອກປະເທດໄດ້ກໍຕໍ່ເມື່ອມີຄວາມຈຳເປັນ ຫຼື ມີການຄ້ຳປະກັນທີ່ເໝາະສົມ ແລະ ຕ້ອງໄດ້ຮັບອະນຸຍາດຈາກສານທີ່ຕັດສິນຄະດີເທົ່ານັ້ນເສຍກ່ອນ.

ໃນກໍລະນີສານ ຫາກໄດ້ຮັບລາຍງານ ຫຼື ເຫັນວ່າບຸກຄົນທີ່ກ່າວມາໃນວັກທີສອງ ຂອງມາດຕານີ້ ມີພຶດຕິກຳຈະໜີບໜີອອກນອກປະເທດ, ສານ ມີສິດອອກຄຳສັ່ງກັກຕົວຜູ້ກ່ຽວໄດ້.

### ມາດຕາ 84 (ປັບປຸງ) ບຸລິມະສິດໃນການຊຳລະສະສາງ

ບຸລິມະສິດ ໃນການຊຳລະສະສາງໜີ້ສິນ ໃຫ້ປະຕິບັດ ດັ່ງນີ້:

1. ເງິນເດືອນ ຫຼື ຄ່າແຮງງານຂອງຜູ້ອອກແຮງງານ ຮອດວັນດຳເນີນຄະດີລົ້ມລະລາຍ ລວມທັງເງິນປະກອບສ່ວນເຂົ້າຄັງປະກັນສັງຄົມ, ຍົກເວັ້ນຄະນະອຳນວຍການ;
2. ຕົ້ນທຶນ ແລະ ດອກເບ້ຍ ທີ່ກູ້ຢືມເພື່ອນຳໃຊ້ໃນຂະບວນການຟື້ນຟູວິສາຫະກິດ;
3. ໜີ້ສິນທີ່ມີການຄ້ຳປະກັນ;
4. ໜີ້ສິນຕໍ່ລັດ ເປັນຕົ້ນ ອາກອນ ແຕ່ບໍ່ໃຫ້ຄິດໄລ່ເກີນ ສອງປີ ຕາມອັດຕາອາກອນ ທີ່ຕ້ອງມອບກ່ອນການດຳເນີນຄະດີລົ້ມລະລາຍ;
5. ໜີ້ສິນທີ່ບໍ່ມີການຄ້ຳປະກັນ.

ການຊຳລະສະສາງໜີ້ສິນ ໃຫ້ໃຊ້ແທນໜີ້ສິນທີ່ມີບຸລິມະສິດກ່ອນ ຄົບຖ້ວນແລ້ວ ເຫຼືອເທົ່າໃດຈຶ່ງໃຊ້ແທນໜີ້ສິນທີ່ມີລຳດັບໄລ່ສະເລ່ຍຫຼຸດລົງມາ.

ສຳລັບໜີ້ສິນທີ່ຢູ່ໃນລຳດັບດຽວກັນ ຖ້າຊັບສິນເພື່ອໃຊ້ແທນໜີ້ສິນ ຫາກບໍ່ພຽງພໍ ໃຫ້ໃຊ້ແທນໜີ້ສິນຕາມອັດຕາສ່ວນຮ້ອຍຂອງມູນຄ່າໜີ້ສິນ ຢ່າງສະເໝີພາບກັນ.

### ມາດຕາ 85 (ປັບປຸງ) ການແບ່ງປັນຊັບສິນທີ່ຍັງເຫຼືອ

ພາຍຫຼັງການຊຳລະສະສາງໜີ້ສິນຂອງວິສາຫະກິດລູກໜີ້ ຕາມບຸລິມະສິດທີ່ໄດ້ກຳນົດໄວ້ໃນມາດຕາ 84 ຂອງກົດໝາຍສະບັບນີ້ແລ້ວ ຖ້າຊັບສິນຂອງວິສາຫະກິດລູກໜີ້ ຫາກຍັງເຫຼືອ ກໍໃຫ້ສະເລ່ຍແບ່ງປັນແກ່ເຈົ້າຂອງ, ຂາຮຸ້ນ ຫຼື ຜູ້ຖືຮຸ້ນຂອງວິສາຫະກິດລູກໜີ້ ຕາມອັດຕາສ່ວນການປະກອບທຶນ.

### ມາດຕາ 86 (ປັບປຸງ) ການຕິດຕາມ ແລະ ການກວດກາ ການຊຳລະສະສາງ

ເຈົ້າໜີ້, ຄະນະກຳມະການເຈົ້າໜີ້ ມີສິດຕິດຕາມ ແລະ ກວດກາ ການຊຳລະສະສາງໜີ້ສິນຂອງວິສາຫະກິດລູກໜີ້, ຖ້າການຊຳລະສະສາງນັ້ນ ຫາກບໍ່ຖືກຕ້ອງຕາມຄຳຕັດສິນຂອງສານ, ເຈົ້າໜີ້, ຄະນະກຳມະການເຈົ້າໜີ້ ກໍສາມາດຮ້ອງຂໍໃຫ້ສານ ພິຈາລະນາລົບລ້າງການຊຳລະສະສາງນັ້ນ ແລ້ວດຳເນີນການຊຳລະສະສາງຄືນໃໝ່.

ອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຕ້ອງລາຍງານການຊຳລະສະສາງໜີ້ສິນຂອງວິສາຫະກິດລົ້ມລະລາຍ ຕໍ່ສານທີ່ຕັດສິນຄະດີ ແລະ ອົງການໄອຍະການປະຊາຊົນທີ່ກ່ຽວຂ້ອງ.

### ມາດຕາ 87 (ປັບປຸງ) ການປິດການຊຳລະສະສາງ

ພາຍຫຼັງອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ໄດ້ຊຳລະສະສາງໜີ້ສິນຂອງວິສາຫະກິດລູກໜີ້ ໃຫ້ແກ່ບັນດາເຈົ້າໜີ້ ແລະ ບຸກຄົນອື່ນທີ່ກ່ຽວຂ້ອງສຳເລັດ ຫຼື ວິສາຫະກິດລູກໜີ້ ບໍ່ມີຊັບສິນທີ່ຈະນຳມາຊຳລະສະສາງອີກ ກໍໃຫ້ອອກຄຳສັ່ງປິດການຊຳລະສະສາງ.

ອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຕ້ອງແຈ້ງຄຳສັ່ງດັ່ງກ່າວ ໃຫ້ອົງການ ແລະ ບຸກຄົນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 79 ຂອງກົດໝາຍສະບັບນີ້ ພ້ອມທັງປະກາດຜ່ານພາຫະນະສື່ມວນຊົນ.

**ມາດຕາ 88 (ປັບປຸງ) ການຮ້ອງຂໍໃຫ້ເປີດການຊຳລະສະສາງຄືນໃໝ່**

ເຈົ້າໜີ້, ຄະນະກຳມະການເຈົ້າໜີ້ ຫຼື ວິສາຫະກິດລູກໜີ້ ມີສິດຮ້ອງຂໍໃຫ້ອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ພິຈາລະນາຄືນກ່ຽວກັບການປິດການຊຳລະສະສາງ ພາຍໃນເວລາ ສິບຫ້າວັນ ນັບແຕ່ວັນທີ່ໄດ້ແຈ້ງຄຳສັ່ງປິດການຊຳລະສະສາງເປັນຕົ້ນໄປ, ຖ້າອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຫາກເຫັນວ່າການຮ້ອງຂໍມີເຫດຜົນພຽງພໍ ກໍຈະເປີດການຊຳລະສະສາງຄືນໃໝ່.

**ມາດຕາ 89 (ໃໝ່) ການພົ້ນຈາກການລົ້ມລະລາຍ**

ເຈົ້າຂອງວິສາຫະກິດສ່ວນບຸກຄົນ ແລະ ຂາຮຸ້ນປະເພດບໍ່ຈຳກັດໜີ້ສິນຂອງວິສາຫະກິດຮຸ້ນສ່ວນ ສາມາດຮ້ອງຂໍຕໍ່ສານ ເພື່ອພິຈາລະນາຕັດສິນໃຫ້ພົ້ນຈາກການລົ້ມລະລາຍ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ໄດ້ຊຳລະໜີ້ສິນຂອງຕົນຢ່າງຄົບຖ້ວນ ຕາມຄຳຕັດສິນຂອງສານ;

2. ເຈົ້າຂອງວິສາຫະກິດ ຫຼື ຂາຮຸ້ນນັ້ນ ໄດ້ໃຫ້ການຮ່ວມມືຢ່າງເຕັມສ່ວນໃນການປະຕິບັດຄຳຕັດສິນຂອງສານ ໃນໄລຍະເວລາ ສາມປີ ນັບແຕ່ວັນທີ່ສານຕັດສິນໃຫ້ລົ້ມລະລາຍເປັນຕົ້ນໄປ. ໃນກໍລະນີເຈົ້າໜີ້ ຫາກຄັດຄ້ານການພົ້ນຈາກການລົ້ມລະລາຍ ສານຕ້ອງພິຈາລະນາການຄັດຄ້ານ ແລະ ອາດເລື່ອນເວລາການພົ້ນຈາກການລົ້ມລະລາຍໄປອີກ ແຕ່ສູງສຸດບໍ່ໃຫ້ເກີນ ຫ້າ ປີ.

## ພາກທີ IX
## ການຄຸ້ມຄອງ ແລະ ການກວດກາ ການຟື້ນຟູ ແລະ ການລົ້ມລະລາຍຂອງວິສາຫະກິດ

### ໝວດທີ 1
### ການຄຸ້ມຄອງການຟື້ນຟູ ແລະ ການລົ້ມລະລາຍຂອງວິສາຫະກິດ

**ມາດຕາ 90 (ໃໝ່) ອົງການຄຸ້ມຄອງການຟື້ນຟູ ແລະ ການລົ້ມລະລາຍຂອງວິສາຫະກິດ**

ອົງການຄຸ້ມຄອງການຟື້ນຟູ ແລະ ການລົ້ມລະລາຍຂອງວິສາຫະກິດ ປະກອບດ້ວຍ:

1. ສານປະຊາຊົນສູງສຸດ;

2. ກະຊວງຍຸຕິທຳ.

**ມາດຕາ 91 (ໃໝ່) ສິດ ແລະ ໜ້າທີ່ຂອງສານປະຊາຊົນສູງສຸດ**

ໃນການຄຸ້ມຄອງການຟື້ນຟູ ແລະ ການລົ້ມລະລາຍຂອງວິສາຫະກິດ ສານປະຊາຊົນສູງສຸດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ສະເໜີສ້າງ ແລະ ປັບປຸງນະໂຍບາຍ ແລະ ກົດໝາຍກ່ຽວກັບການດຳເນີນຄະດີຟື້ນຟູ ແລະ ລົ້ມລະລາຍຂອງວິສາຫະກິດ ຕໍ່ສະພາແຫ່ງຊາດ ພິຈາລະນາ;

2. ຄົ້ນຄວ້າອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ນິຕິກຳອື່ນ ເພື່ອຜັນຂະຫຍາຍກົດໝາຍກ່ຽວກັບການດຳເນີນຄະດີຟື້ນຟູ ແລະ ລົ້ມລະລາຍຂອງວິສາຫະກິດ;

3. ໂຄສະນາ ເຜີຍແຜ່ ກົດໝາຍ, ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ນິຕິກຳອື່ນ ກ່ຽວກັບການດຳເນີນຄະດີຟື້ນຟູ ແລະ ລົ້ມລະລາຍຂອງວິສາຫະກິດ ລວມທັງການຕົກລົງແກ້ໄຂໜີ້ສິນ ໃຫ້ສັງຄົມຢ່າງກວ້າງຂວາງ ແລະ ທົ່ວເຖິງ;

4. ຊີ້ນຳ, ຄຸ້ມຄອງ ແລະ ຕິດຕາມ ການດຳເນີນຄະດີຟື້ນຟູ ແລະ ລົ້ມລະລາຍຂອງວິສາຫະກິດ ລວມທັງການຕົກລົງແກ້ໄຂໜີ້ສິນ ຕາມຄວາມຮັບຜິດຊອບຂອງຕົນ;

5. ຄົ້ນຄວ້າສ້າງກົນໄກ ແລະ ລະບົບປະສານງານໃນການດຳເນີນຄະດີຟື້ນຟູ ແລະ ລົ້ມລະລາຍຂອງວິສາຫະກິດ ໃຫ້ມີຄວາມຄ່ອງຕົວ, ວ່ອງໄວ, ໂປ່ງໃສ ແລະ ມີປະສິດທິພາບ;

6. ກໍ່ສ້າງ ແລະ ຍົກລະດັບຜູ້ພິພາກສາຄະນະສານການຄ້າ ໃຫ້ມີຄວາມຮູ້, ຄວາມສາມາດ ແລະ ກາຍເປັນຜູ້ພິພາກສາອາຊີບກ່ຽວກັບການດຳເນີນຄະດີຟື້ນຟູ ແລະ ລົ້ມລະລາຍຂອງວິສາຫະກິດ;

7. ເກັບກຳ ແລະ ສັງລວມຂໍ້ມູນກ່ຽວກັບການດຳເນີນຄະດີຟື້ນຟູ ແລະ ລົ້ມລະລາຍຂອງວິສາຫະກິດໃນຂອບເຂດທົ່ວປະເທດ;

8. ປະສານສົມທົບ, ຊຸກຍູ້ບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ກ່ຽວກັບການຈັດຕັ້ງປະຕິບັດການຟື້ນຟູ ແລະ ການລົ້ມລະລາຍຂອງວິສາຫະກິດ;

9. ພົວພັນ, ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບການດຳເນີນຄະດີຟື້ນຟູ ແລະ ລົ້ມລະລາຍຂອງວິສາຫະກິດ ລວມທັງການລົ້ມລະລາຍຂ້າມແດນ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 92 (ໃໝ່) ສິດ ແລະ ໜ້າທີ່ຂອງກະຊວງຍຸຕິທຳ**

ໃນການຄຸ້ມຄອງການຟື້ນຟູ ແລະ ການລົ້ມລະລາຍຂອງວິສາຫະກິດ ກະຊວງຍຸຕິທຳ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າອອກນິຕິກຳກ່ຽວກັບການຄຸ້ມຄອງຜູ້ຄວບຄຸມຊັບສິນ ແລະ ນິຕິກຳອື່ນ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;

2. ໂຄສະນາ ເຜີຍແຜ່ ກົດໝາຍ ແລະ ນິຕິກຳກ່ຽວກັບການຟື້ນຟູ ແລະ ການລົ້ມລະລາຍຂອງວິສາຫະກິດ;

3. ສ້າງ ແລະ ພັດທະນາ ວິຊາຊີບການຄວບຄຸມຊັບສິນ ແລະ ຜູ້ຄວບຄຸມຊັບສິນ ໃຫ້ມີຄວາມຮູ້, ຄວາມສາມາດ, ຈັນຍາບັນ ແລະ ສາມາດປະຕິບັດສຳເລັດໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ;

4. ພິຈາລະນາອະນຸຍາດ ໃຫ້ເປັນຜູ້ຄວບຄຸມຊັບສິນ ແລະ ສ້າງບັນຊີຜູ້ຄວບຄຸມຊັບສິນ ໃນຂອບເຂດທົ່ວປະເທດ ພ້ອມທັງຕິດຕາມການເຄື່ອນໄຫວວຽກງານຂອງຜູ້ຄວບຄຸມຊັບສິນ;

5. ປະສານສົມທົບ, ຊຸກຍູ້ບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງກ່ຽວກັບການຄຸ້ມຄອງຜູ້ຄວບຄຸມຊັບສິນ;

6. ພົວພັນ, ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບການຟື້ນຟູ ແລະ ການລົ້ມລະລາຍຂອງວິສາຫະກິດ;

7. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານຂອງຕົນຕໍ່ລັດຖະບານ ຢ່າງເປັນປົກກະຕິ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 93 (ໃໝ່) ສິດ ແລະ ໜ້າທີ່ຂອງກະຊວງ ແລະ ອົງການອື່ນ**

ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ມີ ສິດ ແລະ ໜ້າທີ່ ປະສານສົມທົບ ແລະ ໃຫ້ການຮ່ວມມືກັບສານປະຊາຊົນສູງສຸດ ແລະ ກະຊວງຍຸຕິທຳ ໃນການຄຸ້ມຄອງການຟື້ນຟູ ແລະ ການລົ້ມລະລາຍຂອງວິສາຫະກິດ ຕາມພາລະບົດບາດຂອງຕົນ.

## ໝວດທີ 2
## ການກວດກາການຟື້ນຟູ ແລະ ການລົ້ມລະລາຍຂອງວິສາຫະກິດ

**ມາດຕາ 94 (ໃໝ່) ອົງການກວດກາການຟື້ນຟູ ແລະ ການລົ້ມລະລາຍຂອງວິສາຫະກິດ**

ອົງການກວດກາການຟື້ນຟູ ແລະ ການລົ້ມລະລາຍຂອງວິສາຫະກິດ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນ ອົງການດຽວກັນກັບອົງການຄຸ້ມຄອງການຟື້ນຟູ ແລະ ການລົ້ມລະລາຍຂອງວິສາຫະກິດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 90 ຂອງກົດໝາຍສະບັບນີ້.

2. ອົງການກວດກາພາຍນອກ ຊຶ່ງແມ່ນ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການໄອຍະການປະຊາຊົນ, ອົງການກວດກາລັດ ແລະ ອົງການກວດສອບແຫ່ງລັດ.

**ມາດຕາ 95 (ໃໝ່) ເນື້ອໃນການກວດກາ**

ການກວດກາການຟື້ນຟູ ແລະ ການລົ້ມລະລາຍຂອງວິສາຫະກິດ ມີເນື້ອໃນ ດັ່ງນີ້:

1. ຄວາມສອດຄ່ອງກັບກົດໝາຍ ແລະ ລະບຽບການກ່ຽວກັບການຟື້ນຟູ ແລະ ການລົ້ມລະລາຍຂອງວິສາຫະກິດ;

2. ການນຳໃຊ້ສິດ ແລະ ປະຕິບັດໜ້າທີ່ຂອງອົງການຄຸ້ມຄອງການຟື້ນຟູ ແລະ ການລົ້ມລະລາຍຂອງວິສາຫະກິດ;

3. ການຈັດຕັ້ງ ແລະ ການເຄື່ອນໄຫວຂອງຜູ້ຄອບຄຸມຊັບສິນ, ການປົກປ້ອງສິດ ແລະ ຜົນປະໂຫຍດຂອງເຈົ້າໜີ້, ວິສາຫະກິດລູກໜີ້ ແລະ ບຸກຄົນອື່ນທີ່ກ່ຽວຂ້ອງ.

**ມາດຕາ 96 (ໃໝ່) ຮູບການການກວດກາ**

ການກວດກາ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາຕາມປົກກະຕິ ຊຶ່ງແມ່ນ ການກວດກາຕາມແຜນການ ແລະ ມີກຳນົດເວລາອັນແນ່ນອນ;

2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງຕ້ອງແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ ຢ່າງໜ້ອຍ ຊາວສີ່ຊົ່ວໂມງ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນການກວດກາທີ່ຮີບດ່ວນ ໂດຍບໍ່ມີການແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ.

ການດຳເນີນການກວດກາ ຕ້ອງປະຕິບັດຕາມກົດໝາຍ ແລະ ລະບຽບການຢ່າງເຂັ້ມງວດ.

# ພາກທີ X
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 97 (ໃໝ່) ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ປະຕິບັດນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 98 (ໃໝ່) ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາ ຕາມກົດໝາຍ.

**ມາດຕາ 99 (ປັບປຸງ) ມາດຕະການຕໍ່ເຈົ້າຂອງ, ຜູ້ອໍານວຍການ ຫຼື ຜູ້ບໍລິຫານຂອງວິສາຫະກິດລູກໜີ້**

ຖ້າຜູ້ຄວບຄຸມຊັບສິນ ຫາກກວດກາເຫັນວ່າ ກ່ອນການຮ້ອງຂໍ ຫຼື ຮ້ອງຟ້ອງ ໃຫ້ສານພິຈາລະນາຕັດສິນການລົ້ມລະລາຍຂອງວິສາຫະກິດ, ເຈົ້າຂອງ, ຜູ້ອໍານວຍການ ຫຼື ຜູ້ບໍລິຫານຂອງວິສາຫະກິດລູກໜີ້ ໄດ້ເຊື່ອງອໍາເອກະສານບັນຊີ, ເຊື່ອງອໍາຊັບສິນ, ຍົກຍ້າຍ, ໂອນຊັບສິນ, ເພີ່ມໜີ້ສິນໂດຍບໍ່ຖືກຕ້ອງ, ເຮັດສັນຍາຄໍ້າປະກັນໃຫ້ໜີ້ສິນທີ່ບໍ່ມີການຄໍ້າປະກັນ, ລຶບລ້າງ ຫຼື ຫຼຸດຜ່ອນສິດທວງໜີ້ຕ້ອງຮັບຂອງວິສາຫະກິດລູກໜີ້ ເຈົ້າຂອງ, ຜູ້ອໍານວຍການ ຫຼື ຜູ້ບໍລິຫານນັ້ນ ຈະຖືກດໍາເນີນຄະດີຕາມກົດໝາຍ.

ໃນກໍລະນີສານ ໄດ້ມີຄໍາສັ່ງໃຫ້ຄວບຄຸມຊັບສິນແລ້ວ ແຕ່ເຈົ້າຂອງ, ຜູ້ອໍານວຍການ ຫຼື ຜູ້ບໍລິຫານຂອງວິສາຫະກິດລູກໜີ້ ຫາກຍັງດໍາເນີນທຸລະກິດ, ຮັບສິນເຊື່ອ ຫຼື ກະທໍາອື່ນ ໂດຍບໍ່ໄດ້ຮັບອະນຸຍາດຈາກສານ ຫຼື ຜູ້ຄວບຄຸມຊັບສິນ ຕ້ອງຮັບຜິດຊອບຕໍ່ຄວາມເສຍຫາຍທີ່ເກີດຂຶ້ນ, ຖືກປົດສິດໃນການບໍລິຫານ ຫຼື ຖືກມາດຕະການອື່ນ.

ໃນກໍລະນີສາເຫດຂອງການລົ້ມລະລາຍຂອງວິສາຫະກິດລູກໜີ້ ແມ່ນ ຍ້ອນການບໍລິຫານຜິດພາດຂອງເຈົ້າຂອງ, ຜູ້ອໍານວຍການ ຫຼື ຜູ້ບໍລິຫານແລ້ວ ຜູ້ກ່ຽວຈະຖືກມາດຕະການຫ້າມດໍາລົງຕໍາແໜ່ງເປັນຜູ້ອໍານວຍການ ຫຼື ຜູ້ບໍລິຫານໃນວິສາຫະກິດໃດໜຶ່ງ ເປັນເວລາ ສາມປີ ນັບແຕ່ວັນທີ່ສານຕັດສິນໃຫ້ວິສາຫະກິດລົ້ມລະລາຍ ເປັນຕົ້ນໄປ.

**ມາດຕາ 100 (ປັບປຸງ) ມາດຕະການຕໍ່ຜູ້ຄວບຄຸມຊັບສິນ**

ຜູ້ຄວບຄຸມຊັບສິນ ຫາກໄດ້ລະເມີດກົດໝາຍສະບັບນີ້ ໃນໄລຍະເວລາທີ່ປະຕິບັດໜ້າທີ່ຂອງຕົນນັ້ນ ສານມີສິດປົດຜູ້ຄວບຄຸມຊັບສິນ ພ້ອມທັງພິຈາລະນາຕັດສິນ ໃຫ້ຜູ້ກ່ຽວຮັບຜິດຊອບຕໍ່ຄວາມເສຍຫາຍທີ່ເກີດຂຶ້ນ ຫຼື ລົງໂທດທາງອາຍາ ຕາມກົດໝາຍ.

**ມາດຕາ 101 (ປັບປຸງ) ມາດຕະການຕໍ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດ ຫາກອ້າງຕົນວ່າເປັນເຈົ້າໜີ້ຂອງວິສາຫະກິດທີ່ຮ້ອງຂໍ ຫຼື ຖືກຮ້ອງຟ້ອງໃຫ້ລົ້ມລະລາຍ ໂດຍບໍ່ມີມູນຄວາມຈິງ ຫຼື ຮ້ອງຟ້ອງ ດ້ວຍຄວາມບໍ່ບໍລິສຸດໃຈ ແລະ ມີຈຸດປະສົງເພື່ອເຮັດໃຫ້ວິສາຫະກິດໃດໜຶ່ງ ມີຄວາມເສຍຫາຍຈະຖືກດຳເນີນຄະດີຕາມກົດໝາຍ.

## ພາກທີ XI
## ບົດບັນຍັດສຸດທ້າຍ

**ມາດຕາ 102 (ປັບປຸງ) ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ສານປະຊາຊົນສູງສຸດ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 103 (ປັບປຸງ) ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ພາຍຫຼັງປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ກົດໝາຍສະບັບນີ້ ປ່ຽນແທນ ກົດໝາຍວ່າດ້ວຍການລົ້ມລະລາຍຂອງວິສາຫະກິດ ສະບັບເລກທີ 06/94, ລົງວັນທີ 14 ຕຸລາ 1994.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້